ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ກັນຍາ 2024
ປີທີ 13
ສະບັບທີ 986
ລາຍສັປະດາ

## ປຶກສາຫາລືການປັບປຸງລັດຖະທຳມະນູນ




(ສພຊ) - ປະຕິບັດຕາມແຜນການເຄື່ອນໄຫວວຽກງານຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015 (ຄລຊ) ແລະ ແຜນການເຄື່ອນໄຫວຂອງອະນຸກຳມະການເນື້ອໃນ; ວັນທີ 10 ກັນຍານີ້ ທີ່ສະພາແຫ່ງຊາດ (ສພຊ)ຄະນະກຳມະການລະດັບຊາດໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກ ລັດຖະມົນຕີ, ຮອງປະທານ ຄລຊ ເຊິ່ງມີບັນດາທ່ານຄະນະກຳມະການ, ກອງເລຂາ ແລະ ອະນຸກຳມະການຕ່າງໆຂອງ ຄລຊ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການແຈ້ງຜົນຂອງກອງປະຊຸມກົມການເມືອງສູນກາງພັກ ໃນຕັ້ງວັນທີ 29 ສິງຫາ 2024 ໄດ້ມີທິດຊີ້ນຳຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015; ຂໍ້ຕົກລົງສະບັບເລກທີ 88/ຄລຊ, ລົງວັນທີ 6 ກັນຍາ 2024 ກ່ຽວກັບການແບ່ງຄວາມຮັບຜິດຊອບໃນການປັບປຸງລັດຖະທຳມະນູນ ສະບັບປີ 2015; ແລກປ່ຽນຄວາມເຫັນຕໍ່ທິດຊີ້ນຳຂອງກົມການເມືອງສູນກາງພັກ, ບັນຫາສຳຄັນທີ່ສັງລວມໄດ້ຈາກການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ແລະຮູບແບບການຄົ້ນຄວ້າເນື້ອໃນຂອງລັດຖະທຳມະນູນ.

**(ນາງ ກຸກກິກ ບຸດດາໄຊ)**

## ແບ່ງຄວາມຮັບຜິດຊອບປັບປຸງເນື້ອໃນ ຮ່າງລັດຖະທຳມະນູນແຕ່ລະຂົງເຂດ



(ສພຊ)-ເພື່ອປຶກສາຫາລືກ່ຽວກັບການແບ່ງຄະນະໃນການຄົ້ນຄວ້າປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນເປັນແຕ່ລະຂົງເຂດ ແນໃສ່ເຮັດໃຫ້ການປັບປຸງເນື້ອໃນຂອງຮ່າງລັດຖະທຳມະນູນມີຄວາມລະອຽດ ແລະ ຮັດກຸມຫຼາຍຂຶ້ນ ແລະເພື່ອຜ່ານຮ່າງແຜນດຳເນີນງານຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 (ຄລຊ) ແຕ່ເດືອນສິງຫາ 2024 - ເດືອນກໍລະກົດ 2025; ວັນທີ 5 ກັນຍານີ້ ທີ່ສະພາແຫ່ງຊາດ (ສພຊ) ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ຈັດກອງປະຊຸມປຶກສາຫາລືແບ່ງຄວາມຮັບຜິດຊອບໃນການປັບປຸງເນື້ອໃນຮ່າງລັດຖະທຳມະນູນແຕ່ລະຂົງເຂດໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2

## ພົທ. ສຸວອນ ເລືອງບຸນມີ ເຜີຍແຜ່ຜົນສຳເລັດກອງປະຊຸມ ສະໄໝສາມັນເທື່ອທີ 7 ຢູ່ກອງພົນທະຫານຮາບທີ 1




(ສພຊ) - ວັນທີ 06 ກັນຍາ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແລະ ທ່ານ ລຳໄມ ກູດລາວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10, ຮອງປະທານສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ວຽງຈັນ ຊຸດທີ II ຢູ່ກອງພົນທະຫານຮາບທີ 1 ແຂວງວຽງຈັນ ໂດຍມີທ່ານ ພົຈວ. ວົງຈັນ ພົມຈັນທະມານ ຫົວໜ້າການເມືອງກອງພົນທະຫານຮາບທີ 1 ພ້ອມດ້ວຍຄະນະພັກ, ຄະນະບັນຊາ, ນາຍ ແລະ ພົນທະຫານ ໃຫ້ການຕ້ອນຮັບ ແລະ ເຂົ້າຮ່ວມຮັບຟັງຢ່າງຫຼວງຫຼາຍ.

ຫຼັງຈາກທ່ານ ລຳໄມ ກູດລາວົງ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ວຽງຈັນ ຊຸດທີ II. ທ່ານ ພົທ. ສຸວອນ ເລືອງບຸນມີ ກໍໄດ້ເຜີຍແຜ່ຜົນສຳ

ອ່ານຕໍ່ໜ້າ 5

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ແລະ ແລກປ່ຽນບົດຮຽນຢູ່ຫວຽດນາມ




ອ່ານຕໍ່ໜ້າ 5

## ປະທານ ກວທສ ຮັບການເຂົ້າຢ້ຽມຂໍ່ານັບ ຂອງຜູ້ຕາງໜ້າ UNICEF ປະຈຳລາວ



ອ່ານຕໍ່ໜ້າ 4

## ສືບຕໍ່ສ້າງຄວາມເຂັ້ມແຂງວຽກງານການເງິນ



(ສພຊ) - ຄະນະເລຂາທິການສະພາແຫ່ງຊາດ ໄດ້ສືບຕໍ່ຈັດກອງປະຊຸມສ້າງຄວາມເຂັ້ມແຂງດ້ານວິຊາການວຽກງານການເງິນ ກ່ຽວກັບລະບຽບການເງິນຂອງລັດແລະອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງສະພາແຫ່ງຊາດ (ສພຊ) ໃຫ້ແກ່ພະນັກງານພາຍໃນ ສພຊ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີບັນດາຄະນະກົມ, ຄະນະພະແນກ, ຜູ້ປະສານງານຂອງໂຄງການຈາກກົມ, ສູນ, ຫ້ອງການພ້ອມດ້ວຍຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງສພຊ, ວິທະຍາກອນແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍກວ່າ 80 ທ່ານ.

ຈຸດປະສົງແມ່ນເພື່ອຝຶກອົບຮົມໃຫ້ແກ່ຜູ້ປະສານງານໂຄງການພາຍໃນສະພາແຫ່ງຊາດທີ່ຮັບຜິດຊອບຂຶ້ນແຜນການຮັບໃຊ້ວຽກງານຂອງຕົນໃຫ້ຖືກຕ້ອງ

ອ່ານຕໍ່ໜ້າ 5



ສຸກວ່າໃດ ກິນວ່ານັ້ນ (ໜ້າ 9)




ລັດເບງກອນ... (ໜ້າ 11)




ດຶງດູດນັກທ່ອງທ່ຽວ... (ໜ້າ 12)

# ເຝິກອົບຮົມຕິດຕາມກວດກາ ການປະເມີນຜົນການປະຕິບັດກົດໝາຍ



(ສພຊ) - ເພື່ອເຮັດໃຫ້ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສົ່ງເສີມທັກສະທາງດ້ານວິຊາການກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການທາງດ້ານວຽກງານດັ່ງກ່າວຢ່າງເປັນລະບົບຄົບຊຸດ, ມີປະສິດທິພາບ, ຮັດກຸມແລະເປັນເອກະພາບ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງ; ກຳມາທິການກົດໝາຍ ຈຶ່ງໄດ້ຈັດກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ລັດຖະກອນຂອງສະພາແຫ່ງຊາດ ເຊິ່ງມີພະນັກງານຈາກ 19 ກົມຂອງ 9 ກຳມາທິການ ແລະ 2 ສູນຂອງສະຖາບັນຄົ້ນຄວ້ານິຕິກຳ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ 40 ກວ່າທ່ານ. ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ປະທານກອງປະຊຸມ ໃຫ້ຮູ້ວ່າ: ໄລຍະຜ່ານມາ ສະພາແຫ່ງຊາດ ໄດ້ດຳເນີນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 3 ຄັ້ງ ເຊິ່ງກວມເອົາ 3 ຂົງເຂດຄື: ເສດຖະກິດ, ຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໄດ້ມີການສະຫຼຸບຖອດຖອນບົດຮຽນ ແລະ ອອກນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງຈຳນວນໜຶ່ງ. ເພື່ອເຮັດໃຫ້ວຽກງານດັ່ງກ່າວ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍົກລະດັບວຽກງານດັ່ງກ່າວໂດຍສະເພາະໃຫ້ບັນດາລັດຖະກອນທີ່ເປັນເສນາທິການ ເພື່ອໃຫ້ມີຄວາມຊຳນິຊຳນານ ແລະ ເຂົ້າໃຈເລິກເຊິ່ງຕໍ່ວຽກງານຕິດຕາມກວດກາການປະເມີນຜົນການປະຕິບັດກົດໝາຍ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ 4 ສະບັບຄື: ມະຕິວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ມະຕິວ່າດ້ວຍການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ, ມະຕິວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ, ມະຕິວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ; ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ. ນອກຈາກນີ້, ຍັງໄດ້ທົດລອງການຄົ້ນຄວ້າຂຽນແຜນການແລະເອກະສານຕົວຈິງກ່ຽວກັບວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນວັນທີ 6-8 ກັນຍາ 2024 ທີ່ເມືອງປາກຊັນ ແຂວງບໍລິຄຳໄຊ, ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**



**ແບ່ງຄວາມຮັບຜິດຊອບ...**

(ຕໍ່ຈາກໜ້າ 1)

ຮອງປະທານ ຜູ້ປະຈຳການ ຄລຊ ເຊິ່ງມີບັນດາທ່ານໃນຄະນະອະນຸກຳມະການຕ່າງໆ ແລະ ກອງເລຂາຂອງຄລຊພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຄົ້ນຄວ້າເນື້ອໃນຕໍ່ການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ເຊິ່ງແບ່ງອອກເປັນສາມຂົງເຂດຄື: ເນື້ອໃນຂົງເຂດການປົກຄອງແລະເສດຖະກິດ-ສັງຄົມ, ເນື້ອໃນຂົງເຂດລະບອບການເມືອງ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ເນື້ອໃນຂົງເຂດອົງການນິຕິບັນຍັດ ແລະ ຕຸລາການ (ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ); ຜ່ານຮ່າງແຜນດຳເນີນງານຂອງ ຄລຊ (ແຕ່ເດືອນກັນຍາ 2024-ເດືອນກໍລະກົດ2025) ທັງນີ້, ກໍເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນດຳເນີນໄປດ້ວຍດີ, ຮັບປະກັນຜົນສຳເລັດ ແລະ ທັນຕາມກຳນົດເວລາ. ພ້ອມກັນນັ້ນ, ຍັງໄດ້ປຶກສາຫາລືບາງວຽກງານຮີບດ່ວນຈຳນວນໜຶ່ງທີ່ຈະເລີ່ມປະຕິບັດໃນເດືອນກັນຍານີ້.

**(ນາງ ອາລິນ ສຸພົມມະປະດິດ)**

# ປະທານ ກຕທ ພົບປະເຮັດວຽກກັບທູດກູບາປະຈຳລາວ



(ສພຊ) - ຕອນບ່າຍວັນທີ 5 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ພົບປະເຮັດວຽກຮ່ວມກັບທ່ານ ນາງ ແອນນາ ເອສເທີວຽນວັນເດສ ເອກອັກຄະລັດຖະທູດ ແຫ່ງ ສາທາລະນະລັດກູບາ ປະຈຳ ສປປ ລາວ ເພື່ອປຶກສາຫາລືກ່ຽວກັບແຜນການຕ້ອນຮັບຄະນະຜູ້ແທນຂັ້ນສູງ ຂອງກູບາ ທີ່ຈະມາຢ້ຽມຢາມ, ເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຢູ່ ສປປລາວ.

ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍິນດີຕ້ອນຮັບ ທັງແຈ້ງໃຫ້ຊາບໂດຍຫຍໍ້ກ່ຽວກັບການກະກຽມຄວາມພ້ອມໃນການເປັນເຈົ້າພາບກອງປະຊຸມໄອປາຄັ້ງທີ 45; ພ້ອມກັນນັ້ນ, ກໍສະແດງຄວາມຂອບໃຈຕໍ່ການມາພົບປະແລະເຮັດວຽກໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເສີມສ້າງສາຍພົວພັນມິດຕະພາບແລະການຮ່ວມມືທີ່ເປັນມູນເຊື້ອລະຫວ່າງ ສປປ ລາວ-ສ.ກູບາ ຢ່າງສະເໝີຕົ້ນສະເໝີປາຍ.

ທ່ານ ນາງ ແອນນາ ເອສເທີວຽນວັນເດສ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ຈຸດປະສົງການມາເຮັດວຽກຮ່ວມໃນຄັ້ງນີ້ ພ້ອມທັງປຶກສາຫາລືກ່ຽວກັບການກະກຽມການຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງກູບາ ທີ່ຈະເດີນທາງມາຢ້ຽມຢາມ ສປປລາວ ໃນອະນາຄົດອັນໃກ້ນີ້.

**(ສອນສັກ ວັນວິໄຊ)**

# ໜ່ວຍແມ່ຍິງ ຫຄຊ ຕີລາຄາ ການປະຕິບັດວຽກງານຜ່ານມາ




(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາຂອງໜ່ວຍແມ່ຍິງຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ຫຄຊ) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ5ກັນຍາຜ່ານມາພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ປອ. ເພັດພອນໃຈ ສິນລະປະກິດ ເລຂາໜ່ວຍພັກຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ສະຫາຍ ນາງ ດາວເພັດ ສີຫາວົງ ຮອງປະທານ ທັງເປັນປະທານກວດກາຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດແລະນາງວິນາວັນ ສີປະໄພ ຫົວໜ້າໜ່ວຍແມ່ຍິງຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໂດຍມີບັນດາສະຫາຍຄະນະໜ່ວຍແມ່ຍິງທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ, ຕາງໜ້າອົງການຈັດຕັ້ງມະຫາຊົນພາຍໃນ ຫຄຊ ເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະຜ່ານມາ (2018-2024) ແລະທິດທາງແຜນການ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ບົດສຳຫຼວດການ ນຳພາລວມຂອງຄະນະໜ່ວຍຊຸດເກົ່າ; ຜ່ານຂໍ້ຕົກລົງຮັບຮອງເອົາການແຕ່ງຕັ້ງຄະນະໜ່ວຍແມ່ຍິງ ຫຄຊ ຊຸດໃໝ່ ຄື: ສະຫາຍ ນາງ ຈັນທິດາ ພົມສະແຫວງ ເປັນຫົວໜ້າ, ສະຫາຍ ນາງຈັນທະສອນຊາຕາຮັກເປັນຮອງຫົວໜ້າ. ກອງປະຊຸມຮຽກຮ້ອງມາຍັງຄະນະໜ່ວຍ ແລະ ສະມາຊິກພາຍໃນໜ່ວຍ ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງມະຫາຊົນຢ່າງປົກກະຕິ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍແມ່ຍິງສາມາດຍາດໄດ້ຜົນງານໃໝ່ໃຫຍ່ກວ່າເກົ່າ.

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການໂອ້ລົມຂອງສະຫາຍ ປອ. ເພັດພອນໃຈສິນລະປະກິດ ເພື່ອເປັນທິດຊີ້ນຳ ແລະ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຕາມພາລະບົດບາດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍແລະນຳພາ ຂະບວນການພັດທະນາແມ່ຍິງກ້າວສູ່ຄຸນນະພາບໃໝ່.

**(ນາງ ໄຊໂສພາພອນ ມົ່ງມູງຄຸນ)**

# ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມ ກອງປະຊຸມສຳມະນາລະດັບພາກພື້ນກ່ຽວກັບການບັນລຸ SDGs




(ສພຊ) - ໃນລະຫວ່າງ ວັນທີ 18-28 ສິງຫາ 2024 ທີ່ນະຄອນຫຼວງປັກກິ່ງ ສປ ຈີນ, ຄະນະຜູ້ແທນສະພາແຫ່ງຊາດ ລາວ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເດີນທາງໄປເຂົ້າຮ່ວມພິທີສະເຫຼີມສະຫຼອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຂົ້າເປັນສະມາຊິກອົງການສະຫະພັນລັດຖະສະພາສາກົນ ຫຼື ໄອພີຢູ (IPU) ຄົບຮອບ 40 ປີ ແລະ ເຂົ້າຮ່ວມກອງປະຊຸມສຳມະນາລະດັບພາກພື້ນປີ 2024 ກ່ຽວກັບການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ສຳລັບລັດຖະສະພາຂອງບັນດາປະເທດກຳລັງພັດທະນາ ຄັ້ງທີ 6 ເຊິ່ງມີສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກ IPU ເຂົ້າຮ່ວມ 160 ທ່ານ ຈາກ 32 ປະເທດ ໃນນີ້ມີຂັ້ນປະທານລັດຖະສະພາ ຈາກ 17 ປະເທດ, ປະທານສະຫະພັນລັດຖະສະພາສາກົນ ແລະ ເລຂາທິການໃຫຍ່ສະຫະພັນລັດຖະສະພາສາກົນ.

ກອງປະຊຸມສຳມະນາ ໄດ້ດຳເນີນພາຍໃຕ້ຫົວຂໍ້ "ການແລກປ່ຽນລະຫວ່າງລັດຖະສະພາທີ່ເຂັ້ມແຂງເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ່ດີຂຶ້ນ" ໂດຍໄດ້ແບ່ງອອກເປັນ 4 ຫົວຂໍ້ຍ່ອຍເພື່ອປຶກສາຫາລືເຊັ່ນ: ການຮ່ວມມືກັນຮັກສາສັນຕິພາບ ແລະ ສະຖຽນລະພາບ ເພື່ອການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ; ຍຸດທະສາດການພັດທະນາເພື່ອເສດຖະກິດໂລກາພິວັດທີ່ມີຜົນປະໂຫຍດທົ່ວໂລກ; ການເຄົາລົບຄວາມຫຼາກຫຼາຍຂອງອາລະຍະທຳ, ຊຸກຍູ້ການແລກປ່ຽນວັດທະນະທຳ ແລະ ການຮຽນຮູ້ເຊິ່ງກັນແລະກັນ; ການພັດທະນາປະຊາທິປະໄຕທີ່ເໝາະສົມກັບເງື່ອນໄຂຂອງຊາດແນໃສ່ການຊຸກຍູ້ຢ່າງໜັກແໜ້ນຕໍ່ການຫັນເປັນທັນສະໄໝ. ບັນດາຄະນະຜູ້ແທນຈາກປະເທດຕ່າງໆ ໄດ້ປະກອບຄຳຄິດຄຳເຫັນຢ່າງຫຼາກຫຼາຍ ໂດຍຍົກໃຫ້ເຫັນບົດຮຽນປະເທດຂອງຕົນຕາມຫົວຂໍ້ກອງປະຊຸມ.

ໃນການເຂົ້າຮ່ວມກອງປະຊຸມສຳມະນາດັ່ງກ່າວ, ທ່ານຫົວໜ້າຄະນະຜູ້ແທນລາວ ກໍໄດ້ຂຶ້ນກ່າວຄຳເຫັນໃນຫົວຂໍ້ "ການຮ່ວມມືກັນຮັກສາສັນຕິພາບແລະສະຖຽນລະພາບ ເພື່ອການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ" ໂດຍທ່ານໄດ້ເນັ້ນເຖິງບົດບາດຂອງລັດຖະສະພາໃນການປະກອບສ່ວນ ແລະ ຮັກສາສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງໃນລະດັບພາກພື້ນ ແລະ ສາກົນ ເນື່ອງຈາກລັດຖະສະພາມີບົດບາດສຳຄັນໃນການຮັບຮອງກົດໝາຍ ແລະ ໃຫ້ສັດຕະຍາບັນແກ່ບັນດາສົນທິສັນຍາຕ່າງໆ. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນເຖິງ ສປປລາວ ໄດ້ປະຕິບັດນະໂຍບາຍການຕ່າງປະເທດທີ່ສົ່ງເສີມສັນຕິພາບ, ເອກະລາດ, ມິດຕະພາບ ແລະ ເພີ່ມທະວີການຮ່ວມມືກັບປະເທດຕ່າງໆ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການປະຕິບັດພັນທະຂອງຕົນຢູ່ໃນພາກພື້ນ ແລະສາກົນ; ພ້ອມທັງຍຶດໝັ້ນເຈດຈຳນົງທາງການເມືອງໃນການຮ່ວມມືກັບປະຊາຄົມໂລກໃນການແກ້ໄຂບັນຫາຂໍ້ຂັດແຍ່ງ ແລະ ສິ່ງທ້າທາຍຕ່າງໆໃນພາກພື້ນ ແລະໃນໂລກໂດຍສັນຕິວິທີ, ປະກອບສ່ວນເຂົ້າໃນການຮັກສາສັນຕິພາບ, ຄວາມໝັ້ນຄົງ ແລະ ການຮ່ວມມືເພື່ອການພັດທະນາ.

ທ່ານບຸນລ້ອມແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ກໍໄດ້ຂຶ້ນປະກອບຄຳເຫັນໃນຫົວຂໍ້ "ການເຄົາລົບຄວາມຫຼາກຫຼາຍຂອງອາລະຍະທຳ ແລະ ຊຸກຍູ້ການແລກປ່ຽນວັດທະນະທຳ ແລະ ການຮຽນຮູ້ເຊິ່ງກັນແລະກັນ" ເຊິ່ງທ່ານໄດ້ກ່າວເຖິງຄວາມຫຼາກຫຼາຍຂອງອາລະຍະທຳ ແມ່ນສະແດງໃຫ້ເຫັນເຖິງຄວາມຫຼາກຫຼາຍຂອງຊົນເຜົ່າ ແລະ ສາສະໜາ; ຍົກໃຫ້ເຫັນເຖິງຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ວິຖີຊີວິດ ແລະ ສິລະປະອັນອຸດົມສົມບູນຂອງ ສປປ ລາວ ໃນ 50 ຊົນເຜົ່າ ທີ່ມີຮີດຄອງປະເພນີ, ຄວາມເຊື່ອຖື ແລະ ວິຖີຊີວິດທີ່ແຕກຕ່າງກັນ. ພ້ອມດຽວກັນນັ້ນ, ທ່ານຍັງຮຽກຮ້ອງໃຫ້ບັນດາສະມາຊິກລັດຖະສະພາ ປົກປັກຮັກສາ ແລະ ສົ່ງເສີມເອກະລັກຂອງຊາດ, ວັດທະນະທຳ, ພາສາ, ສາສະໜາ ເພື່ອດຳລົງຊີວິດຢູ່ໃນສັງຄົມດຽວກັນຢ່າງກົມກຽວ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ໄປຢ້ຽມຢາມສະຖານທີ່ທ່ອງທ່ຽວທາງດ້ານປະຫວັດສາດແລະວັດທະນະທຳ ທີ່ມີຊື່ສຽງຂອງ ສປ ຈີນ, ຫໍພິພິທະພັນພະລາຊະວັງ, ຫໍພິພິທະພັນກອມມູນິດຈີນ; ຢ້ຽມຢາມແຂວງຊານຊີ, ເມືອງຕ້າຖົງ, ເມືອງທາຍປອນ ແລະຢ້ຽມຢາມພື້ນຖານທາງດ້ານເສດຖະກິດຢູ່ນະຄອນທຽນຈີນ.

# ກສຕສ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ




(ສພຊ) - ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ເປັນເສນາທິການໃຫ້ແກ່ ກສຕສ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນຂັ້ນແຂວງທົ່ວປະເທດ ປະຈຳປີ 2024 ໂດຍການເປັນປະທານຂອງທ່ານ ມະນີໄສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດຮຽນຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວຽກງານຫັນເປັນດິຈິຕອນ ຂອງ ສປປ ລາວ, ການຕິດຕາມກວດກາການຄຸ້ມຄອງສິ່ງແວດລ້ອມຂອງໂຄງການລົງທຶນແລະຂັ້ນຕອນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບໂຄງການລົງທຶນຂອງລັດຂົງເຂດເສດຖະກິດ; ພ້ອມກັນນັ້ນ, ຍັງໄດ້ຕິດຕາມ, ເກັບກຳຂໍ້ມູນ, ຮຽນຮູ້, ຄົ້ນຄວ້າ, ທົດສອບວິທີການຄົ້ນຄວ້າ, ຂີດຂຽນ ແລະ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ເພື່ອຮັບປະກັນໃຫ້ການນຳເອົາບົດຮຽນທີ່ໄດ້ຄົ້ນຄວ້າຮໍ່າຮຽນ ສາມາດນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບແລະປະສິດທິຜົນດີຂຶ້ນກວ່າເກົ່າ.

ທ່ານ ມະນີໄສ ຊາມຸນຕີ ກ່າວວ່າ: ຜ່ານການຝຶກອົບຮົມຄັ້ງນີ້ ສາມາດຕີລາຄາໄດ້ວ່າ ບັນດາສຳມະນາກອນສາມາດເຂົ້າໃຈເນື້ອໃນຂອງບັນຫາຕ່າງໆຢ່າງເລິກເຊິ່ງ ແລະ ຈະສາມາດນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງໄດ້ດີພໍສົມຄວນໃນການເປັນເສນາທິການໃຫ້ແກ່ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ພ້ອມນັ້ນ, ກໍສຸມສະຕິປັນຍາ, ຄົ້ນຄວ້າ ແລະ ມີຄວາມຮັບຜິດຊອບສູງສຸມໃສ່ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍຍົກໃຫ້ເຫັນເຖິງສະພາບການທີ່ເກີດຂຶ້ນຕົວຈິງໃນທ້ອງຖິ່ນຕົນເອງ ແລະ ບາງບັນຫາທີ່ພົບຄວາມຫຍຸ້ງຍາກ ກໍໄດ້ສະເໜີຂໍທິດຊີ້ນຳ. ຫວັງວ່າບັນດາສຳມະນາກອນຈະນຳເອົາບົດຮຽນຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິຜົນດີຂຶ້ນກວ່າເກົ່າ ແລະ ນຳເອົາບົດຮຽນນີ້ ໄປເຝິກອົບຮົມໃຫ້ແກ່ພະນັກງານຢູ່ສະພາປະຊາຊົນຂັ້ນແຂວງຕົນ ຮັບຮູ້ຕໍ່ວຽກງານດັ່ງກ່າວນຳກັນ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນໃນວັນທີ 6-7 ກັນຍານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ, ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ແລະ ມູນນິທິເວດມິນເທີ ເພື່ອປະຊາທິປະໄຕ (WFD) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ໜ່ວຍແມ່ຍິງກົມກວດກາ ສະຫຼຸບການປະຕິບັດວຽກງານໄລຍະຜ່ານມາ



(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາຂອງໜ່ວຍແມ່ຍິງກົມກວດກາ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 5 ກັນຍາຜ່ານມາພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ນາງ ຫວັນໄຊ ຈັນທະລາເລຂາໜ່ວຍພັກກົມກວດກາ, ສະຫາຍ ນາງ ອຸດນາລີ ໄຊຍະສັກ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ໝູຮັກ ດວງດີ ຮອງຫົວໜ້າໜ່ວຍແມ່ຍິງກົມກວດກາ ໂດຍມີບັນດາສະຫາຍຄະນະໜ່ວຍແມ່ຍິງທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ, ຕາງໜ້າອົງການຈັດຕັ້ງມະຫາຊົນພາຍໃນກົມກວດກາ ເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະຜ່ານມາ (2018-2024) ແລະ ທິດທາງແຜນການ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງກົມກວດກາ; ຜ່ານຂໍ້ຕົກລົງຮັບຮອງເອົາການແຕ່ງຕັ້ງຄະນະໜ່ວຍແມ່ຍິງກົມກວດກາຄື: ສະຫາຍ ນາງ ພັດສະດາກອນ ພົມມະຈັນ ເປັນຫົວໜ້າ, ສະຫາຍ ນາງ ໝູຮັກ ດວງດີ ເປັນຮອງຫົວໜ້າ. ນອກຈາກນັ້ນ, ກອງປະຊຸມຮຽກຮ້ອງມາຍັງຄະນະໜ່ວຍ ແລະ ສະມາຊິກພາຍໃນໜ່ວຍ ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງມະຫາຊົນຢ່າງຕັ້ງໜ້າ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງລາວ ໂດຍຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍແມ່ຍິງກົມກວດກາ ສາມາດຍາດໄດ້ຜົນງານດີເດັ່ນຂຶ້ນກວ່າເກົ່າ.

ຕອນທ້າຍຂອງກອງປະຊຸມ, ໄດ້ຮັບຟັງການໂອ້ລົມຈາກສະຫາຍ ນາງ ຫວັນໄຊ ຈັນທະລາ ເພື່ອເປັນທິດຊີ້ນຳຕໍ່ຄະນະໜ່ວຍແມ່ຍິງກົມກວດກາ ໃນການນຳພາສະມາຊິກແມ່ຍິງພາຍໃນໜ່ວຍ ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍໃນການຈັດຕັ້ງປະຕິບັດທິດທາງໜ້າທີ່ວຽກງານຈຸດສຸມໃນ 5 ປີຕໍ່ໜ້າ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກອງປະຊຸມເວທີປຶກສາຫາລືແລກປ່ຽນມິດຕະພາບ ລະຫວ່າງສະມາຊິກລັດຖະສະພາສາກົນ ຢູ່ ສປຈີນ



(ສພຊ) - ລະຫວ່າງວັນທີ 29 ສິງຫາ - 4 ກັນຍາ 2024 ທ່ານ ປອ. ບຸນຕາ ອ່ອນນາວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືແລກປ່ຽນມິດຕະພາບ ລະຫວ່າງສະມາຊິກລັດຖະສະພາສາກົນ ຢູ່ນະຄອນຫຼວງປັກກິ່ງ ແລະ ນະຄອນຊຽງໄຮ້ ທີ່ຈັດໂດຍສະມາຄົມມິດຕະພາບນານາຊາດແຫ່ງ ສປ ຈີນ ພາຍໃຕ້ຫົວຂໍ້ "ການເສີມສ້າງຄູ່ຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ" ເຊິ່ງມີຜູ້ແທນຕາງໜ້າ 43 ປະເທດເຂົ້າຮ່ວມ; ບັນດາຄະນະຜູ້ແທນໄດ້ຮ່ວມກັນແລກປ່ຽນຄຳຄິດຄຳເຫັນແລະປຶກສາຫາລືໃນຫຼາຍຫົວຂໍ້ຍ່ອຍ. ນອກຈາກນີ້, ຜູ້ແທນສະພາແຫ່ງຊາດ ສປປລາວຍັງໄດ້ເຂົ້າຮ່ວມເວທີປຶກສາຫາລືຍ່ອຍທີ 4 ໃນຫົວຂໍ້ "ການຮ່ວມມື ໜຶ່ງແລວ ໜຶ່ງເສັ້ນທາງ ທີ່ມີຄຸນນະພາບ ແລະ ການຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ" ໂດຍສະເໜີໂຄງການທາງລົດໄຟ ລາວ-ຈີນ ເປັນຕົວແບບໃນຂອບການຮ່ວມມື ໜຶ່ງແລວ ໜຶ່ງເສັ້ນທາງ ທີ່ສະແດງໃຫ້ເຫັນຜົນປະ ໂຫຍດອັນໃຫຍ່ຫຼວງ ພາຍຫຼັງເປີດບໍລິການມາໄດ້ເກືອບ 3 ປີ ພ້ອມທັງສິ່ງທ້າທາຍໃນການຄຸ້ມຄອງບໍລິຫານທັງທາງດ້ານເຕັກນິກ, ບຸຄະລາກອນ ແລະ ໜີ້ສິນ ເພື່ອໃຫ້ມີຄວາມຍືນຍົງ.

ນອກຈາກນັ້ນ, ຄະນະຜູ້ແທນທັງໝົດ ຍັງໄດ້ມີໂອກາດຢ້ຽມຢາມພື້ນຖານການພັດທະນາເສດຖະກິດ-ສັງຄົມ ໂດຍການໄປທັດສະນະສຶກສາພື້ນຖານການຜະລິດ 2 ແຫ່ງ ຢູ່ນະຄອນຊຽງໄຮ້ ຄື: ໂຮງງານຜະລິດຍົນ COMAC ເປັນຜູ້ຜະລິດຍົນຂົນສົ່ງຜູ້ໂດຍສານ ແລະ ໂຮງງານ SAIC ເຊິ່ງເປັນຜູ້ຜະລິດຍານພາຫະນະທາງບົກໃຫຍ່ທີ່ສຸດ, ມີຫຼາຍຍີ່ຫໍ້ ແລະ ຈຳໜ່າຍຫຼາຍທີ່ສຸດໃນປະເທດຈີນ; ທັດສະນະສຶກສາໝູ່ບ້ານຫວູຟາງ ທີ່ເປັນຕົວແບບດ້ານການພັດທະນາຊົນນະບົດແບບຍືນຍົງ ໂດຍການສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ມີພາກລັດສະໜັບສະໜູນດ້ານນະໂຍບາຍ; ພົບປະຮັດວຽກກັບທ່ານ ເສິນ ຈີໜິງ (Chen Jining) ເລຂາຄະນະພັກນະຄອນຊຽງໄຮ້; ຢ້ຽມຢາມສະພາປະຊາຊົນນະຄອນຊຽງໄຮ້ ແລະ ສະຖານທີ່ຈັດກອງປະຊຸມໃຫຍ່ພັກກອມມູນິດຈີນ.

# ສ້າງຄວາມເຂັ້ມແຂງດ້ານການຕິດຕາມກວດກາ ແລະ ສົ່ງເສີມພາວະການເປັນຜູ້ນຳດ້ານການເມືອງ

(ສພຊ) - ວັນທີ 03 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຜ່ານຮ່າງບົດບັນທຶກຄວາມເຂົ້າໃຈລະຫວ່າງຄະນະເລຂາທິການສະພາແຫ່ງຊາດຕາງໜ້າໂດຍກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ (ICPMS) ກັບ ມູນນິທິເວສມິນສເຕີ ເພື່ອປະຊາທິປະໄຕ (WFD) ກ່ຽວກັບໂຄງການ: ສ້າງຄວາມເຂັ້ມແຂງດ້ານການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສົ່ງເສີມພາວະການເປັນຜູ້ນຳດ້ານການ ເມືອງຂອງແມ່ຍິງໃນລາວ, ໂດຍການເປັນປະທານຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຮອງຫົວໜ້າ ICPMS; ເຂົ້າຮ່ວມມີບັນດາທ່ານຄະນະກົມພາຍໃນ ສພຊ, ທ່ານ ນາງ ເພັດມະນີ ໄຊຈະເລີນ ຫົວໜ້າ WFD ປະຈຳ ສປປລາວ, ທ່ານຜູ້ຕາງໜ້າຈາກກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດແລະພາກສ່ວນທີ່ກ່ຽວຂ້ອງ.



ທ່ານ ນາງ ດາວເພັດ ສີຫາວົງ ໄດ້ກ່າວວ່າ: ຈຸດປະສົງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອປຶກສາຫາລື, ປະກອບຄຳຄິດຄຳເຫັນຕໍ່ກັບຮ່າງບົດບັນທຶກຄວາມເຂົ້າໃຈກ່ຽວກັບໂຄງການສ້າງຄວາມເຂັ້ມແຂງດ້ານການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສົ່ງເສີມພາວະການເປັນຜູ້ນຳດ້ານການເມືອງຂອງແມ່ຍິງໃນລາວ ເພື່ອນຳເອົາຜົນຂອງການປຶກສາຫາລື ລາຍງານຄະນະປະຈຳສະພາແຫ່ງຊາດແລ້ວສະເໜີຫາກະຊວງການຕ່າງປະເທດ ເພື່ອອະນຸມັດຈັດຕັ້ງປະຕິບັດໂຄງການ.

ບັນດາທ່ານຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຕິດຕາມການສະເໜີບົດ, ປະກອບຄຳເຫັນ ແລະ ປຶກສາຫາລືຢ່າງກົງໄປກົງມາ ຕໍ່ກັບບົດບັນທຶກຄວາມເຂົ້າໃຈຂອງໂຄງການດັ່ງກ່າວ ໂດຍສະເພາະແມ່ນວຽກການຕິດຕາມກວດກາຂອງບັນດາກຳມາທິການພາຍໃນ ສພຊ ພ້ອມທັງວຽກສົ່ງເສີມພາວະການເປັນຜູ້ນຳຂອງແມ່ຍິງໃນສະພາແຫ່ງຊາດ ເພື່ອຕອບສະໜອງໃຫ້ແກ່ການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອນຳຜົນປະໂຫຍດອັນສູງສຸດມາໃຫ້ແກ່ປະຊາຊົນ ຕາມ 3 ພາລະບົດບາດຕົ້ນຕໍຄື: ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະດ້ານການຕິດຕາມກວດກາ.



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ6ກັນຍານີ້ທີ່ສະພາແຫ່ງຊາດ, ທ່ານ ບຸນຕາ ເທບພະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ບິລານ ອໍຣັງ ເຊັບ ດູຣານີ (Bilal AurangZebDurrani) ຜູ້ຕາງໜ້າອົງການອຸຍນິເຊບ (UNICEF) ປະຈຳ ສປປລາວ.

ທ່ານບຸນຕາເທບພະວົງ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຢ່າງສຸດໃຈຕໍ່ທ່ານ ບິລານ ອໍຣັງ ເຊັບ ດູຣານີ ທີ່ມາຮັບໜ້າທີ່ໃໝ່ຢູ່ ສປປ ລາວ; ສະແດງຄວາມຍ້ອງຍໍ, ຂອບໃຈ ແລະ ຕີລາຄາສູງຕໍ່ການປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວເວົ້າລວມ, ເວົ້າສະເພາະກຳມາທິການວັດທະນະທຳ-ສັງຄົມ ກັບ UNICEF. ດ້ວຍການຮ່ວມມືແລະປະກອບສ່ວນໃນຕະຫຼອດໄລຍະຜ່ານມາ ເຮັດໃຫ້ການເຄື່ອນໄຫວວຽກງານຂອງກຳມາທິການ ມີບັນຍາກາດອັນໃໝ່ທີ່ດີຂຶ້ນແລະມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ ໂດຍສະເພາະການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາ, ການຕົກລົງບັນຫາສຳຄັນຂອງຊາດ, ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນຂອງກຳມາທິການ ລວມທັງການເຄື່ອນໄຫວວຽກງານຕ່າງປະເທດ; ພິເສດ ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ກຳມາທິການໄດ້ຮັບສື່ສິ່ງພິມຈຳນວນໜຶ່ງຈາກ UNICEF ເພື່ອແຈກຢາຍໃຫ້ແກ່ສະມາຊິກສະພາແຫ່ງຊາດໄວ້ເປັນຂໍ້ມູນ ເປັນຕົ້ນປຶ້ມບັນທຶກ, ແຜ່ນພັບມະຕິກອງປະຊຸມສະພາແຫ່ງຊາດ ແລະ ປັດຈຸບັນ UNICEF ໄດ້ສະໜັບສະໜູນດ້ານງົບປະມານແລະວິຊາການສ້າງຂະບວນການປຸກລະດົມນັກຮຽນນັກສຶກສາໃນທຸກຊັ້ນທຸກສາຍ ເຂົ້າມາຮຽນໃຫ້ຫຼາຍຂຶ້ນໃຫ້ທັງພາກລັດຖະບານແລະສະພາແຫ່ງຊາດ ພ້ອມກັນຕະລຸມບອນສ້າງຂະບວນການເອົານ້ອງກັບຄືນສູ່ໂຮງຮຽນ.

ທ່ານ ບິລານ ອໍຣັງ ເຊັບ ດູຣານີ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະຍິນດີຕໍ່ການຮັບໜ້າທີ່ໃໝ່ຂອງປະທານກຳມາທິການວັດທະນະທຳ-ສັງຄົມ ເຊັ່ນກັນ; ຕີລາຄາສູງຕໍ່ການຮ່ວມມືຂອງ UNICEF ກັບສະພາແຫ່ງຊາດລາວ ໃນໄລຍະຜ່ານມາ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ເອົາໃຈໃສ່ຊີ້ນຳ-ນຳພາວຽກງານຂອງ UNICEF ເພື່ອເສີມຂະຫຍາຍການຮ່ວມມື, ໃຫ້ການຊ່ວຍເຫຼືອ ແລະ ປະກອບສ່ວນຕາມຄວາມຮັບຜິດຊອບຂອງຕົນເຂົ້າໃນວຽກງານການພົວພັນຮ່ວມມືລະຫວ່າງສອງອົງການໃນຕໍ່ໜ້າ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ໜ່ວຍແມ່ຍິງກົມບໍລິຫານ-ພິທີການ ສະຫຼຸບການປະຕິບັດວຽກງານ



(ສພຊ) - ຕອນບ່າຍວັນທີ 9 ກັນຍາຜ່ານມາ, ໜ່ວຍແມ່ຍິງກົມບໍລິຫານ-ພິທີການ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ຂັນທອງ ແພງສີໃຈ ຄະນະໜ່ວຍພັກກົມບໍລິຫານ-ພິທີການ, ສະຫາຍ ນາງ ຄຳຫຼ້າ ສິດທະຈອນ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ເຄືອວັນ ສຸດທະຈັກ ຮອງຫົວໜ້າໜ່ວຍແມ່ຍິງກົມບໍລິຫານ-ພິທີການ ໂດຍມີບັນດາສະຫາຍຄະນະໜ່ວຍແມ່ຍິງທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ, ຕາງໜ້າອົງການຈັດຕັ້ງມະຫາຊົນພາຍໃນກົມດັ່ງກ່າວເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໄລຍະຜ່ານມາ (2018-2024) ແລະທິດທາງແຜນການ 5 ປີຕໍ່ໜ້າຂອງໜ່ວຍແມ່ຍິງກົມບໍລິຫານ-ພິທີການ, ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍຊຸດເກົ່າ; ຜ່ານຂໍ້ຕົກລົງຂອງຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາຄະນະໜ່ວຍແມ່ຍິງກົມບໍລິຫານ-ພິທີການ ຊຸດໃໝ່ຄື: ສະຫາຍ ນາງ ຄຳຜິວ ພົມມະຈັກ ເປັນຫົວໜ້າ, ສະຫາຍ ນາງ ຈັນທະລາ ໄຊຍະວົງ ເປັນຮອງຫົວໜ້າແລະສະຫາຍ ນາງແກ້ວມະນີ ໄຊຍະເດດ ເປັນຄະນະ.

ຕອນທ້າຍກອງປະຊຸມ, ໄດ້ຮັບຟັງການໂອ້ລົມຈາກສະຫາຍ ຂັນທອງ ແພງສີໃຈ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງຮຽກຮ້ອງມາຍັງຄະນະໜ່ວຍ ແລະ ສະມາຊິກພາຍໃນໜ່ວຍ ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງມະຫາຊົນຢ່າງປົກກະຕິ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີຂອງແມ່ຍິງລາວ ຕິດພັນກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍແມ່ຍິງສາມາດຍາດໄດ້ຜົນງານໃໝ່ໃຫຍ່ກວ່າເກົ່າ.

**(ສອນສັກ ວັນວິໄຊ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ)- ໃນວັນທີ03-08ກັນຍາ2024ຄະນະຜູ້ແທນສະພາແຫ່ງຊາດລາວນຳໂດຍສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຢ້ຽມຢາມ ແລະແລກປ່ຽນບົດຮຽນຢູ່ ສສ. ຫວຽດນາມ ຕາມການເຊື້ອເຊີນຂອງສະຫາຍ ຫງວຽນ ດຶກ ຫ້າຍ (Nguyễn Đức Hải) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດໂດຍໄດ້ພົບປະສອງຝ່າຍຢູ່ນະຄອນດານັງ ເຊິ່ງສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດນັບແຕ່ຂັ້ນສູນກາງຮອດຂັ້ນທ້ອງຖິ່ນ, ການຢ້ຽມຢາມຄັ້ງນີ້ ເປັນການສືບຕໍ່ຈັດຕັ້ງຜັນຂະຫຍາຍປະຕິບັດຕາມເນື້ອໃນບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດສອງປະເທດ; ສອງຝ່າຍໄດ້ປຶກສາຫາລືຮ່ວມກັນກ່ຽວກັບກົນໄກການຮ່ວມມືຂອງສະພາແຫ່ງຊາດ, ບັນດາກຳມາທິການ, ສະມາຊິກສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ,ຂະແໜງການຂອງລັດຖະບານ ໂດຍສະເພາະອົງການກວດສອບແຫ່ງລັດ, ບັນດາກະຊວງຂົງເຂດເສດຖະກິດ ໃຫ້ນັບມື້ແໜ້ນແຟ້ນຍິ່ງໆຂຶ້ນ ພ້ອມທັງສະເໜີທິດທາງການຮ່ວມມືຂອງສອງສະພາແຫ່ງຊາດໃນຕໍ່ໜ້າ ໂດຍສຸມໃສ່ການຂຽນປຶ້ມຄົບຮອບ50ປີການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວກັບສະພາແຫ່ງຊາດຫວຽດນາມ, ຊຸກຍູ້ການພົວ ພັນຮ່ວມມືພົບປະແລກປ່ຽນບົດຮຽນຂອງສອງນະຄອນຄືນະຄອນຫຼວງພະບາງ ແລະ ນະຄອນໂຫ້ຍອານ ແຂວງກວາງນາມ,ການຕິດຕາມກວດກາຊຸກຍູ້ສົ່ງເສີມການລົງທຶນຂອງບັນດາຫົວໜ່ວຍທຸລະກິດທີ່ມາລົງທຶນຢູ່ ສປປ ລາວ ແລະ ສສ.ຫວຽດນາມ, ຄົ້ນຄວ້າ ແລະ ນຳໃຊ້ທ່າແຮງທີ່ອຳນວຍຄວາມສະດວກທາງດ້ານແລວເສດຖະກິດຕາເວັນອອກ ໂດຍເລັ່ງໃສ່ການພັດທະນາທ່າເຮືອວຸ້ງອາງ ແລະດ່ານນາມຢ່າງ ເຊິ່ງເປັນຍຸດທະສາດເຂດແຄວ້ນລະຫວ່າງບັນດາແຂວງພາກໃຕ້ຂອງ ສປປ ລາວ ແລະ ບັນດາແຂວງພາກກາງຂອງ ສສ.ຫວຽດນາມເພື່ອຂັບເຄື່ອນທາງດ້ານເສດຖະກິດ ແລະ ບົດຮຽນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການກວດສອບ ໃນການແກ້ໄຂຜົນຂອງການກວດສອບໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍເພື່ອປະຕິບັດ 3 ເສົາຄໍ້າ ແລະ 8 ມາດຕະການຂອງອົງການຕົນ; ພ້ອມດຽວກັນນີ້, ສອງຝ່າຍຍັງໄດ້ເປັນເອກະພາບຊຸກຍູ້ສະໜັບສະໜູນເຊິ່ງກັນແລະກັນໃນເວທີພາກພື້ນ ແລະສາກົນ ໂດຍສະເພາະສະໜັບສະໜູນສະພາແຫ່ງຊາດລາວໃນການເປັນເຈົ້າພາບຈັດກອງປະຊຸມ AIPA ຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ ໃນເດືອນຕຸລາຈະມາເຖິງນີ້.

ການພົບປະແລກປ່ຽນບົດຮຽນລະຫວ່າງຄະນະຜູ້ແທນສະພາແຫ່ງຊາດສອງປະເທດໃນຄັ້ງນີ້ ເປັນການຮັດແໜ້ນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່,ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດແລະປະຊາຊົນສອງຊາດ ລາວ-ຫວຽດນາມໃຫ້ນັບມື້ນັບເຂັ້ມແຂງທັງລວງກວ້າງ ແລະ ລວງເລິກ.

ນອກຈາກນີ້, ສະຫາຍສົມມາດພົລເສນາແລະສະຫາຍ ຫງວຽນ ດຶກ ຫ້າຍ ຍັງໄດ້ຮ່ວມກັນເປັນປະທານກອງປະຊຸມສຳມະນາຫົວຂໍ້ສະເພາະ "ບົດບາດຂອງສະພາແຫ່ງຊາດໃນການສ້າງ ແລະ ຜັນຂະຫຍາຍນະໂຍບາຍພັດທະນາເສດຖະກິດ-ສັງຄົມ" ທີ່ນະຄອນດານັງ.

ໃນວັນທີ 07 ກັນຍາ ທີ່ນະຄອນຫຼວງຮ່າໂນ້ຍ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຢ້ຽມຢາມ ແລະ ເຮັດວຽກກັບອົງການກວດສອບແຫ່ງລັດພາຍໃຕ້ຫົວຂໍ້ "ຍົກສູງບົດບາດ ແລະ ປະສິດທິຜົນໃນການເຄື່ອນໄຫວຂອງອົງການກວດສອບແຫ່ງລັດຫວຽດນາມ" ໂດຍແມ່ນສະຫາຍໂງວັນຕວັນ(Ngô Văn Tuấn) ກຳມະການສູນກາງພັກ, ປະທານອົງການກວດສອບແຫ່ງລັດພ້ອມດ້ວຍຄະນະ ໃຫ້ການຕ້ອນຮັບ ແລະ ເຮັດວຽກຮ່ວມກັບຄະນະຜູ້ແທນລາວ. ສະຫາຍຮອງປະທານສະພາແຫ່ງຊາດລາວ ຕີລາຄາວ່າການພົບປະແລກປ່ຽນບົດຮຽນໃນຄັ້ງນີ້ ເຮັດໃຫ້ຄະນະຜູ້ແທນທີ່ເຂົ້າຮ່ວມ ກໍໄດ້ບົດຮຽນຂອງເພື່ອນກ່ຽວກັບການປະຕິບັດນະໂຍບາຍການດຶງດູດການລົງທຶນຈາກຕ່າງປະເທດ, ນະໂຍບາຍເສດຖະກິດລວມສູນ, ແຜນແມ່ບົດແຫ່ງຊາດໃນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອພັດທະນາເສດຖະກິດ-ສັງຄົມຢູ່ບັນດາ ເຂດພູດອຍຫ່າງໄກສອກຫຼີກແລະການເສີມຂະຫຍາຍບົດບາດຂອງອົງການກວດສອບ ໃນການປະກອບສ່ວນຍົກສູງບົດບາດສະພາແຫ່ງຊາດ, ຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການແກ້ໄຂຜົນການກວດສອບ ແລະ ມາດຕະການຈັດຕັ້ງປະຕິບັດ.

ພ້ອມກັນນັ້ນ, ຄະນະຜູ້ແທນລາວແລະຫວຽດນາມຍັງໄດ້ຢ້ຽມຢາມກຸ່ມບໍລິສັດຫຸ້ນສ່ວນເຈື່ອງຫ້າຍ (Truong Hai-THACO),ເຂດເສດຖະກິດເປີດຈູລາຍ(Chu Lai),ລັດວິສາຫະກິດຕັດຫຍິບ ຮ່ວາເຖາະ (Hòa Thọ),ເຂດທີ່ໝັ້ນການປະຕິວັດລາວໃຕ້ແລະຮ່ອງຮອຍປະຫວັດສາດທາງດ້ານວັດທະນະທຳ;ພົບປະສະຫາຍ ເລືອງ ຫງວຽນ ມິ່ງຈ່ຽດ(Lương Nguyễn Minh Triết) ກຳມະການສຳຮອງສູນກາງພັກ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແຂວງກວາງນາມ;ພົບປະສະຫາຍ ຫງວຽນ ວັນ ກວາງ (Nguyễn Văn Quảng) ກຳມະການສູນກາງພັກ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງນະຄອນດາໜັງ ແລະ ຢ້ຽມຢາມສະຖານກົງສູນໃຫຍ່ປະຈຳນະຄອນ ດາໜັງ. ພ້ອມດຽວກັນນີ້, ຮອງປະທານສະພາແຫ່ງຊາດລາວ ໄດ້ເຊື້ອເຊີນສະຫາຍ ຫງວຽນ ດຶກ ຫ້າຍ ຮອງປະທານສະພາແຫ່ງຊາດຫວຽດນາມ ໄປຢ້ຽມຢາມ ແລະ ພົບປະແລກປ່ຽນບົດຮຽນທີ່ ສປປ ລາວ ໃນເວລາອັນຄວນ.

## ສືບຕໍ່...

(ຕໍ່ຈາກໜ້າ 1)

ແລະ ສອດຄ່ອງຕາມລະບຽບກົດໝາຍ, ຍົກສູງຄວາມຮັບຜິດຊອບ ແລະສ້າງຂີດຄວາມສາມາດໃຫ້ແກ່ພະນັກງານກົມການເງິນແລະຜູ້ປະສານງານໂຄງການພາຍໃນ ສພຊ, ແນະນຳລະບຽບການຄຸ້ມຄອງການນຳໃຊ້ງົບປະມານຂອງອົງການຈັດຕັ້ງສາກົນ ແລະ ຂັ້ນຕອນການປະສານງານລະຫວ່າງຜູ້ປະສານງານໂຄງການພາຍໃນ ສພຊ ແລະ ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າຂອງສະພາແຫ່ງຊາດ ທັງເປັນການປັບປຸງຂອດການປະສານງານລະຫວ່າງກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າແລະຜູ້ປະສານງານໂຄງການພາຍໃນ ສພຊ ໃນການນຳໃຊ້ງົບປະມານຂອງລັດແລະງົບປະມານຈາກອົງການຈັດຕັ້ງສາກົນ ໃຫ້ມີຄວາມສະດວກ, ວ່ອງໄວ, ຖືກຕ້ອງຕາມແຜນການ, ຕາມລະບຽບຫຼັກການ, ເປັນລະບຽບ, ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນເປີດກອງປະຊຸມວ່າ: ວຽກງານການເງິນ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະ ເປັນປັດໄຈຕົ້ນຕໍໃນການຂັບເຄື່ອນໃຫ້ບັນດາແຜນການ, ແຜນງານຂອງສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຜົນສຳເລັດເປັນຢ່າງດີຕະຫຼອດມາ; ດັ່ງນັ້ນ, ຈຸດປະສົງຂອງກອງປະຊຸມທີ່ມີຄວາມສຳຄັນດັ່ງກ່າວນີ້ ແມ່ນເພື່ອເປັນການຍົກສູງພາລະບົດບາດການເປັນເສນາທິການທີ່ດີ, ມີຄຸນນະພາບ ໃຫ້ແກ່ຄະນະນຳຂອງສະພາແຫ່ງຊາດໃນວຽກງານການເງິນຮັບປະກັນການປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບຫຼັກການ ເປັນຕົ້ນການຄຸ້ມຄອງນຳໃຊ້ງົບປະມານລວມຂອງລັດ, ການນຳໃຊ້ງົບປະມານຂອງອົງການຈັດຕັ້ງສາກົນ, ແຫຼ່ງທຶນຊ່ວຍເຫຼືອລ້າຂອງສະພາແຫ່ງຊາດ ລວມໄປເຖິງຂັ້ນຕອນການປະສານງານລະຫວ່າງຜູ້ປະສານງານຂອງບັນດາກົມ, ສູນ, ຫ້ອງການ ກັບກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ. ທ່ານເລຂາທິການສະພາແຫ່ງຊາດກ່າວອີກວ່າ: ກອງປະຊຸມຄັ້ງນີ້ເປົ້າໝາຍເຂົ້າຮ່ວມກໍລ້ວນແລ້ວແຕ່ແມ່ນພະນັກງານຜູ້ທີ່ຖືກມອບໝາຍຮັບຜິດຊອບລົງເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງທີ່ມີປະສົບການ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນານດ້ານວຽກງານການເງິນເປັນຢ່າງດີຫວັງຢ່າງຍິ່ງວ່າພາຍຫຼັງສຳເລັດການເຝິກອົບຮົມແລ້ວ, ບັນດາທ່ານຈະນຳເອົາບົດຮຽນໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນໃນກົມກອງຂອງຕົນ ໃຫ້ໄດ້ຮັບປະສິດທິຜົນໃນຕໍ່ໜ້າ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2024 ສະບັບເລກທີ3797/ກງ, ລົງວັນທີ24 ພະຈິກ 2023; ຂໍ້ຕົກລົງຂອງກະຊວງການເງິນວ່າດ້ວຍການກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດແລະຕ້ານການຟຸມເຟືອຍ ສະບັບເລກທີ 200/ກງ, ລົງວັນທີ25 ມັງກອນ 2023; ຄຳແນະນຳວ່າດ້ວຍການປະກອບເອກະສານ ແລະ ກວດກາລາຍຈ່າຍງົບປະມານຂອງລັດ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ຄັງເງິນແຫ່ງຊາດ ສະບັບເລກທີ 0866/ກງ, ລົງວັນທີ22 ມີນາ2019; ພາບລວມຂອງການສະໜັບສະໜູນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຂັ້ນຕອນການປະສານງານ, ການສ້າງແຜນກິດຈະກຳປະຈຳປີ, ແຜນກິດຈະກຳ, ການປະກອບເອກະສານ ເພື່ອຂໍນຳໃຊ້ງົບປະມານຊ່ວຍເຫຼືອລ້າ ແລະ ການສະຫຼຸບລາຍງານດ້ານເນື້ອໃນ; ແນະນຳ ແລະ ເຝິກປະຕິບັດຕົວຈິງໃນການສະໜອງເອກະສານຜ່ານ Google Drive ແລະ ສ້າງຟອມປະເມີນຜ່ານ Google Form; ແນະນຳລະບຽບການນຳໃຊ້ງົບປະມານຈາກອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ແນະນຳກ່ຽວກັບການປະເມີນ ແລະ ການລາຍງານ ກິດຈະກຳ (MEL). ຜູ້ເຂົ້າຮ່ວມຍັງໄດ້ສົນທະນາແລກປ່ຽນບົດຮຽນກັບບັນດາວິທະຍາກອນ ພ້ອມທັງດຳເນີນການປະເມີນຜົນຂອງການເຂົ້າຮ່ວມກອງປະຊຸມຜ່ານ Google Form.

ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນວັນທີ07-08ກັນຍາ2024 ທີ່ເມືອງວັງວຽງ ແຂວງວຽງຈັນ, ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌(STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ສຸພາວັນ ທອນສະນິດ)**

## ພທ. ສຸວອນ...

(ຕໍ່ຈາກໜ້າ 1)

ເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນແຕ່ວັນທີ 10 ມິຖຸນາ ຫາ 02 ກໍລະກົດ 2024 ລວມ 17 ວັນ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງລວມມີ 3 ພາກ (3 ຂົງເຂດວຽກງານ) ຄື: ວຽກງານຂອງລັດຖະບານ, ວຽກງານຂອງອົງການກວດສອບແຫ່ງລັດ ແລະ ວຽກງານຂອງສະພາແຫ່ງຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ, ສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ປັບປຸງ 11 ສະບັບຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ວຽກງານສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8. ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມອີກວ່າຜົນສຳເລັດກອງປະຊຸມສະໄໝສາມັນເທື່ອນີ້ ໄດ້ສະແດງໃຫ້ເຫັນສະພາບຄວາມເປັນຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 6 ເດືອນຕົ້ນປີ ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ ອັນເນື່ອງມາຈາກຜົນກະທົບຈາກປັດໄຈພາຍນອກແລະພາຍໃນຕົ້ນຕໍແມ່ນມາຈາກປັດໄຈພາຍໃນຂອງພວກເຮົາເອງ; ມະຕິເລກທີ137/ສພຊ, ລົງວັນທີ02/7/2024 ທັງມີລັກສະນະເປັນນິຕິກຳທັງມີລັກສະນະຮຽກຮ້ອງໃຫ້ລັດຖະບານສືບຕໍ່ຕັ້ງໜ້າ, ອອກແຮງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ບຸກທະລຸແຂງແຮງກວ່າເກົ່າ ໂດຍປຸກລະດົມກຳລັງແຮງຂອງທົ່ວປວງຊົນເຂົ້າຮ່ວມ, ເຮັດໃຫ້ບັນຫາຄັ່ງຄ້າງທີ່ເປັນສິ່ງທ້າທາຍໜັກໜ່ວງ ໄດ້ຮັບການແກ້ໄຂຄ່ອຍໆກັບຄືນສູ່ສະພາບປົກກະຕິ.

ນອກນັ້ນ ຍັງໄດ້ຮັບຟັງບັນຫາ, ຂໍ້ສະເໜີ, ຄວາມຂັດຂ້ອງໝອງໃຈຈາກນາຍ-ພົນທະຫານ ເຊິ່ງບາງບັນຫາກໍໄດ້ຕອບກັບທີ່, ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ກໍຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

ໃນຕອນທ້າຍ, ທ່ານພົທ. ສຸວອນ ເລືອງບຸນມີ ໄດ້ຕີລາຄາສູງຕໍ່ການປະກອບສ່ວນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຕະຫຼອດມາ ພ້ອມທັງເນັ້ນໜັກ ແລະ ໃຫ້ທິດຊີ້ນຳຄະນະພັກ-ຄະນະນຳ ກໍຄືນາຍ-ພົນທະຫານ ຈົ່ງພ້ອມກັນຮັກສາຄວາມສາມັກຄີຮັກແພງເຊິ່ງກັນແລະກັນ, ຮັກສາສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດກົມກອງ ກໍຄືຄອບຄົວ ມີຄວາມເຂັ້ມແຂງເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ.

**(ອານຸສອນ ພູມມີທອນ)**

# ປະທານ ສພຂ ຫຼວງນ້ຳທາ ພົບປະໂອ້ລົມ ອົງການໄອຍະການ ແລະ ພະແນກຍຸຕິທຳ

(ສພຂ) - ວັນທີ 4 ກັນຍາ 2024, ທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງປະທານສະພາປະຊາຊົນແຂວງຫຼວງນ້ຳທາຜູ້ຊີ້ນຳວຽກງານຂົງເຂດສານ, ອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ໄດ້ລົງເຄື່ອນໄຫວພົບປະ, ໂອ້ລົມ ແລະ ຊຸກຍູ້ວຽກງານຢູ່ອົງການໄອຍະການປະຊາຊົນ ໂດຍການເຂົ້າຮ່ວມຂອງ ທ່ານ ນາງ ວອນແສງ ບົວດອກທອງ ຫົວໜ້າອົງການໄອຍະການປະຊາຊົນແຂວງຫລວງນ້ຳທາ, ມີພະນັກງານນຳພາ-ຄຸ້ມຄອງ, ພະນັກງານຫຼັກແຫຼ່ງ ຕະຫລອດຮອດພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ ເຂົ້າຮ່ວມ.




ໃນກອງປະຊຸມ ທ່ານ ນາງ ວອນແສງ ບົວດອກທອງ ໄດ້ລາຍງານການເຄື່ອນໄຫວວຽກງານຮອບດ້ານອົງການໄອຍະການໃນໄລຍະຜ່ານມາ ຄະນະພັກ-ຄະນະນຳອົງການໄອຍະການປະຊາຊົນແຂວງໄດ້ຕັ້ງໜ້າເຮັດໜ້າທີ່ການເມືອງ-ນຳພາແນວຄິດໃຫ້ແກ່ພະນັກງານ-ລັດຖະກອນດ້ວຍການເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ ຄັ້ງທີ 11 ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ8ຂອງອົງຄະນະພັກແຂວງ ມະຕິຂອງສະພາແຫ່ງຊາດ ມະຕິຂອງສະພາປະຊາຊົນແຂວງ ມະຕິກອງປະຊຸມໃຫຍ່ຄັ້ງທີ5ຂອງອົງຄະນະພັກປະຊາຊົນສູງສຸດ, ມະຕິກອງປະຊຸມໃຫຍ່ ຄັ້ງທີ 2 ຂອງໜ່ວຍພັກອົງການໄອຍະການປະຊາຊົນ ໂດຍລວມແລ້ວພະນັກງານ-ລັດຖະກອນ ພາຍໃນອົງການໄອຍະການປະຊາຊົນມີຄຸນທາດການເມືອງໜັກແໜ້ນມີຄວາມຈົງຮັກພັກດີຕໍ່ພັກ-ຕໍ່ລັດເຊື່ອໝັ້ນຕໍ່ການນຳພາຂອງພັກເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກປະຕິບັດສິດ ແລະ ໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ມີຄວາມສັດຊື່ບໍລິສຸດສະກັດກັ້ນ ແລະຕ້ານປະກົດການຫຍໍ້ທໍ້ຢ່າງເປັນເຈົ້າການ ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນເພີ່ມຂຶ້ນ ແລະ ທາງສຽງຈົ່ມວ່າຂອງສັງຄົມຕໍ່ອົງການໄອຍະການປະຊາຊົນຫຼຸດລົງ, ໃນໜຶ່ງປີຜ່ານມາອົງການໄອຍະການປະຊາຊົນແຂວງ ແລະ ເຂດ ໄດ້ອອກຄຳສັ່ງຕາມການສະເໜີຂອງອົງການສືບສວນ-ສອບສວນຄືອອກຄຳສັ່ງຈັບຕົວ 12ຄົນ; ອອກຄຳສັ່ງກັກຂັງພາງ 18 ຄົນ; ອອກຄຳສັ່ງຕໍ່ການກັກຂັງພາງ82ຄົນ; ຄຳສັ່ງປ່ອຍຕົວ 01 ສະບັບ. ເຂົ້າຮ່ວມກວດກາເຄື່ອງຂອງກາງຄະດີນຳເຈົ້າໜ້າທີ 4 ຄັ້ງ ການຄົ້ນຄວ້າຄະດີອາຍາ ໄດ້ຮັບສຳນວນຄະດີອາຍາຂັ້ນຕົ້ນຈຳນວນ 165 ເລື່ອງ, ໄດ້ຖະແຫຼງ ແລະ ສົ່ງຟ້ອງຂຶ້ນສານ 148 ເລື່ອງ, ສົ່ງຄືນເຈົ້າໜ້າທີ່ 10 ເລື່ອງ,ລວມແກ້ໄຂຄະດີອາຍາຂັ້ນຕົ້ນ 158 ເລື່ອງ, ພວມຄົ້ນຄ້ວາ 07 ຄະດີ. ເຂົ້າຮ່ວມຖະແຫຼງໃນທີ່ປະຊຸມສານຄະດີອາຍາ 76 ເລື່ອງ, ສານຕັດສິນເອົາຕາມຄຳຖະແຫຼງຂອງໄອຍະການ 76 ເລື່ອງ, ເທົ່າກັບ 100% ພ້ອມທັງໄດ້ລາຍງານອົງການໄອຍະການປະຊາຊົນພາກເໜືອຊາບ. ໃນ 06 ເດືອນຜ່ານມາໄດ້ປະສານສົມທົບກັບຂະແໜ່ງປະຕິບັດຄຳຕັດສິນຂອງສານພະແນກຍຸຕິທຳ ເກັບກຳຂໍ້ມູນສະຖິຕິການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດມີຄື: ຄະດີອາຍາ 1,191 ເລື່ອງ, ເຂົ້າໃໝ່ 23; ລວມ 1,214; ປະຕິບັດສຳເລັດ 75 ເລື່ອງ, ໂຈະປະຕິບັດ 43 ເລື່ອງ, ມອບເງິນໃຫ້ຄູ່ຄວາມຄະດີແພ່ງ, ຄະດີອາຍາ, ເງິນອາກອນ ແລະ ເງິນປັບໃໝມີຄື: ເງິນອາກອນ ແລະ ເງິນປັບໃໝລວມທັງໝົດ 536.535.000 ກີບ ໄດ້ຮັບການລາຍງານບັນຊີຊັບສິນທີ່ສານຕັດສິນຮິບເປັນຂອງລັດມີໂທລະສັບຈຳນວນ 81 ໜ່ວຍ, ລົດຈັກ 57 ຄັນ,ລົດໃຫ່ຍ 02 ຄັນ; ໄດ້ຮັບການລາຍງານຈາກອົງການກວດກາຂອງລັດແຂວງມີຊັບທີ່ຖືກຍຶດ, ອາຍັດທີ່ດິນ 31 ຕອນ, ເງິນກີບ 4,944,179,000 ກີບ; ເງິນຍວນ 3,822,500 ຢວນ, ເງິນບາດ 322,000 ບາດ; ເງິນໂດລາ 4,800 ໂດລາ, ເງິນດົງ 33,300,000 ດົງ; ວັດຖຸມີຄ່າມີຄຳຈຳນວນ2,903,49ການ ແລະ ອື່ນໆ. ອົງການໄອຍະການປະຊາຊົນແຂວງໄດ້ເກັບກຳສະຖິຕິຜູ້ດັດສ້າງ, ຜູ້ຖືກຫາ ແລະນັກໂທດເປັນປົກກະຕິ ລາຍລະອຽດມີຄື: ຜູ່ຖືກດັດສ້າງ ມີ432ຄົນ, ຍິງ 49 ຄົນ,ຕ່າງປະເທດ 02 ຄົນ; ຜູ່ຖືກຫາ 623 ຄົນ, ຍິງ 22 ຄົນ, ຕ່າງປະເທດ 02 ຄົນ; ນັກໂທດ 414 ຄົນ, ຍິງ 48 ຄົນ, ຕ່າງປະເທດ 09 ຄົນ, ຍິງ 01 ຄົນ; ໄດ້ຮ່ວມຄົ້ນຄ້ວານັກໂທດທີ່ມີເງື່ອນໄຂສະເໜີໃຫ້ອະໄພຍະໂທດຫຼຸດຜ່ອນໂທດປະຈຳປີ 2024 ມີທັງໝົດ 57 ຄົນ, ຍິງ 04 ຄົນ, ພິຈາລະນາເພື່ອສະເໜີໃຫ້ອະໄພຍະໂທດລະດັບຊາດຈຳນວນ 01 ຄັ້ງ;

ໃນຕອນທ້າຍ ທ່ານ ຄຳຟອງ ອິນມານີ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຫຼາຍດ້ານທີ່ອົງການໄອຍະການປະຊາຊົນຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ຄະນະນຳຈົ່ງເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານມີແນວຄິດອຸ່ນອຽນທຸ່ນທ່ຽງ ຕິດພັນກັບການປັບປຸງແບບແຜນວິທີນຳພາ, ວິທີເຮັດວຽກ, ມີການວາງແຜນພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດຕາມແບບແຜນທີ່ວາງໄວ້ ຖ້າຫາກບໍ່ສອດຄ່ອງຕ້ອງຮີບຮ້ອນປັບປຸງ ແລະ ແກ້ໄຂ, ເປັນແບບຢ່າງທີ່ດີໃນການຈັດຕັ້ງປະຕິບັດກົດໝາຍ, ເພີ່ມທະວີການຈັດຕັ້ງປະຕິບັດວຽກງານວິຊາສະເພາະ,ຄວາມສາມັກຄີເປັນເອກະພາບ ທັງນີ້ກໍເພື່ອເຮັດໃຫ້ອົງການໄອຍະການປະຊາຊົນນັບມື້ເຕີບໃຫຍ່ເຂັ້ມແຂງ, ການຄົ້ນຄວ້າແກ້ໄຂຄະດີມີຄວາມຖືກຕ້ອງ, ພາວະວິໄສ, ໂປ່ງໃສ ແລະ ຍຸຕິທຳ.

ແລະ ໃນວັນດຽວກັນ; ທ່ານຄຳຟອງອິນມານີຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ລົງຊຸກຍູ້ການຈັດຕັ້ງປະຕິບັດວຽກງານພະນັກງານຫລັກແຫຼ່ງຢູ່ພະແນກຍຸຕິທຳແຂວງ, ມີຫົວໜ້າພະແນກຍຸຕິທຳແຂວງ, ຮອງປະທານຄະນະກຳມະການຍຸຕິທຳ ປກຊ-ປກສ ສພຂ, ພ້ອມດ້ວຍພະນັກງານຫລັກແຫຼ່ງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ມະນີພອນ ນາບຸນແພງ ກຳມະການພັກແຂວງຫົວໜ້າພະແນກຍຸຕິທຳແຂວງ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານການເຄື່ອນໄຫວໃນໄລຍະຜ່ານມາ ໄດ້ຕັ້ງໜ້າເຮັດໜ້າທີ່ການເມືອງ-ນຳພາແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນເປັນປົກກະຕິ, ໄດ້ລົງປັບປຸງຄືນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານໄດ້ 9 ບ້ານ, ຈັດຝຶກອົບຮົມຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານໄດ້ 13 ບ້ານ, ປະເມີນຄືນຄອບຄົວແລະບ້ານແບບຢ່າງປະຕິບັດກົດໝາຍໄດ້ 319 ຄອບຄົວ, ອອກໃບຢັ້ງຢືນການເອົາເດັກມາເປັນລູກລ້ຽງຂອງພົນລະເມືອງລາວໄດ້ 4 ສະບັບ, ໃຫ້ຄຳປຶກສາທາງດ້ານກົດໝາຍໃຫ້ແກ່ປະຊາຊົນໂດຍບໍ່ເສຍຄ່າ 94 ຄັ້ງ, ເປີດການຮຽນການສອນກົດໝາຍຂັ້ນພື້ນຖານໄລຍະສັ້ນ 45 ວັນປະຈຳປີ 2024 ໃນ 4 ເມືອງຂອງແຂວງ, ຈັດກອງປະຊຸມວຽກງານຍຸຕິທຳຮາກຖານທົ່ວແຂວງ, ລົງກວດກາແລະປັບປຸງກົດລະບຽບຂອງບ້ານໄດ້ 12 ບ້ານ, ຮັບຂໍ້ຂັດແຍ່ງທັງໝົດ 2 ເລື່ອງ, ໄດ້ກວດກາ, ຢັ້ງຢືນຄວາມຖືກຕ້ອງຂອງສັນຍາແລະເອກະສານປະເພດຕ່າງໆໄດ້ 535 ສະບັບ ແລະ ວຽກງານຈັດຕັ້ງປະຕິບັດວຽກງານຄຳຕັດສິນຂອງສານປະຕິບັດສຳເລັດ 13 ເລື່ອງ, ຄະດີແພ່ງ 6 ເລື່ອງ, ອາຍາ 7 ເລື່ອງ; ຈາກນັ້ນ ໃນກອງປະຊຸມຍັງໄດ້ມີການສະເໜີແລກປ່ຽນບັນຫາທີ່ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເພື່ອຊອກຫາວິທີແກ້ໄຂ ເຮັດໃຫ້ວຽກງານຂອງພະແນກຍຸຕິທຳແຂວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບກວ່າເກົ່າ.

ຕອນທ້າຍທ່ານຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ ໄດ້ມີຄຳເຫັນໂອ້ລົມທ່ານໃຫ້ໄດ້ຮູ້ເຖິງຄວາມສຳຄັນຂອງວຽກງານໃນຂົງເຂດວຽກງານຍຸຕິທຳຢ່າງເລິກເຊິ່ງ, ພ້ອມທັງ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການນຳຂອງພະແນກຍຸຕິທຳແຂວງ ແຕ່ລະຂັ້ນທີ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາວຽກງານເຫັນວ່າມີຜົນສຳເລັດຫລາຍດ້ານ, ເຖິງຈະພົບບັນຫາຫຍຸ້ງຍາກແຕ່ມີຄວາມຮັບຜິດຊອບສູງ ສາມາດຈັດຕັ້ງປະຕິບັດຫຼາຍໜ້າວຽກ, ໂອກາດ ນີ້ທ່ານຍັງໄດ້ເນັ້ນໜັກໃຫ້ສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນໃຫ້ມີຄວາມໜັກແໜ້ນ, ເອົາໃຈໃສ່ໃນແບບແຜນວິທີເຮັດວຽກ, ວິທີນຳພາໃຫ້ລະອຽດອ່ອນຢ່າງທ່ຽງທຳ, ຮັກສາຄວາມມັກຄີພາຍໃນ, ປະຕິບັດລະບຽບກົດໝາຍເຂັ້ມງວດ ແລະ ຊອກຮູ້ຮ່ຳຮຽນເອົາບົດຮຽນໃໝ່ໆ ເພື່ອໝູນໃຊ້ເຂົ້າໃນວຽກງານວິຊາສະເພາະໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

# ແຂວງສາລະວັນ ໄດ້ຮັບເຄື່ອງຊ່ວຍເຫຼືອ ຄອມພິວເຕີ ແລະ ອຸປະກອນການຮຽນ



(ສພຂ) - ທ້າຍເດືອນສິງຫາ2024ທີ່ຜ່ານມາ, ທ່ານນາງ ພອນເພັດອຸ່ນແກ້ວຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ14ແຂວງສາລະວັນ ໄດ້ມອບຄອມພິວເຕີຕັ້ງໂຕະ ແລະ ຄອມພິວເຕີ ຕັ້ງຕັກ ຈຳນວນ 6 ເຄື່ອງ ລວມມູນຄ່າ 72 ລ້ານກວ່າກີບ ໃຫ້ສະພາປະຊາຊົນແຂວງສາລະວັນ ໄດ້ນຳໃຊ້ເຂົ້າໃນວຽກງານຂອງສະພາປະຊາຊົນແຂວງ, ຕາງໜ້າຮັບຂອງທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມເປັນສັກຂີພະຍານມອບ-ຮັບ ມີທ່ານຫົວໜ້າ-ຮອງຫົວໜ້າ ອົງການໄອຍະການປະຊາຊົນແຂວງ, ຄະນະເລຂາທິການ ແລະ ພະນັກງານເຂົ້າຮ່ວມ.

ທ່ານຂັນໄຊລັດຖະເຮົ້າ ໄດ້ກ່າວສະແດງຄວາມຂອບໃຈ, ຮູ້ບຸນຄຸນຢ່າງສຸດຊຶ້ງ ແລະ ຊົມເຊີຍທີ່ທ່ານຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ14ແຂວງສາລະວັນ ທີ່ເປັນຫ່ວງເປັນໄຍປະກອບສ່ວນມອບເຄື່ອງຈຳນວນດັ່ງກ່າວ ໃຫ້ສະພາປະຊາຊົນແຂວງໃນຄັ້ງນີ້ ເປັນການປະກອບສ່ວນຊຸກຍູ້ ສະໜອງອຸປະກອນທີ່ຈຳເປັນໃຫ້ແກ່ການປະຕິບັດໜ້າທີ່ວຽກງານໄດ້ນຳໃຊ້ເຄື່ອງມືທີ່ທັນສະໄໝ ໃຫ້ມີຄວາມສະດວກວອງໄວຂຶ້ນຕື່ມ.

ໃນຕອນບ່າຍຂອງວັນດຽວກັນ ທ່ານ ນາງ ພອນເພັດອຸ່ນແກ້ວ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ແລະ ທ່ານ ນາງ ສູນໄຖ ໄຊຍະແສງກຳມະການພັກແຂວງຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍທ່ານ ນາງ ທອງໃບ ໄຊຍະສານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ສືບຕໍ່ເຄື່ອນໄຫວມອບເຄື່ອງອຸປະກອນການຮຽນ ໃຫ້ແກ່ນັກຮຽນຊັ້ນປະຖົມສູນບູນ ບ້ານຣູກະໂຍ ເມືອງຕະໂອຍ ແລະ ຈາກນັ້ນ; ທ່ານຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກໍໄດ້ເຄື່ອນໄຫວມອບເຄື່ອງຊ່ວຍເຫຼືອອຸປະກອນການຮຽນໃຫ້ແກ່ສະມາຊິກສະພາປະຊາຊົນແຂວງປະຈຳເມືອງລະຄອນເພັງ ແຂວງສາລະວັນ ເພື່ອນຳໄປມອບຕໍ່ໃຫ້ໂຮງຮຽນປະຖົມຂອງເມືອງ ທີ່ຂາດເຂີນ ແລະ ມີຄວາມຕ້ອງການນຳໃຊ້ເຂົ້າໃນການຮຽນການສອນນ້ອງໆນັກຮຽນ, ອຸປະກອນການຮຽນດັ່ງກ່າວມີມູນຄ່າລວມ 30 ລ້ານກວ່າກີບ.

**(ດີລຳພົນ ພົມມະຈັນ)**

# ສສຊ ແລະ ສສຂ ຄຳມ່ວນ ປາຖະກະຖາວັນສຳຄັນຂອງຊາດ




(ສພຂ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນທົ່ວແຂວງຄຳມ່ວນແລະປະຕິບັດຕາມແຜນການເຄື່ອນໄຫວພົບປະປະຊາຊົນ ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ສະບັບເລກທີ 943/ຄລຂ.ຄມ, ລົງວັນທີ 20 ສິງຫາ 2024; ພາຍຫຼັງທີ່ໄດ້ສຳເລັດການເຄື່ອນໄຫວໃນລະຫວ່າງວັນທີ 26-29 ສິງຫາ ທີ່ຜ່ານມາສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງໄຊບົວທອງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຕິດພັນກັບການຈັດຕັ້ງຜັນຂະຫຍາຍແລະໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີIX ແລະສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II, ເຊິ່ງໄດ້ແບ່ງອອກເປັນ 2 ຄະນະ: ຄະນະທີ 1 ນຳໂດຍທ່ານ ນາງ ບັງອອນ ໄຊຍະສິດກຳມະການປະຈຳພັກແຂວງຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ12ແຂວງຄຳມ່ວນແລະທ່ານບຸນທະວີ ພິລາວັນ ຫົວໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງໄຊບົວທອງ, ພ້ອມດ້ວຍພະນັກງານ,ວິຊາການຈາກສະພາປະຊາຊົນແຂວງແລະໜ່ວຍງານຊ່ວຍວຽກ ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງເຂົ້າຮ່ວມ; ແລະ ຄະນະທີ 2 ນຳໂດຍທ່ານ ສາຍຄຳພະໄຊສິດທິເດດກຳມະການພັກແຂວງ ເຈົ້າເມືອງໄຊບົວທອງ, ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ທ່ານ ນາງ ຖາວອນ ໄຊຍະສອນ ສສຂ ປະຈຳເຂດເລືອກຕັ້ງເມືອງ, ພ້ອມດ້ວຍພະນັກງານຈາກສະພາປະຊາຊົນຂັ້ນແຂວງແລະໜ່ວຍງານຊ່ວຍວຽກ ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງເຂົ້າຮ່ວມເປັນຄະນະ, ໄດ້ສຳເລັດໃນການເຄື່ອນໄຫວພົບປະອຳນາດການປົກຄອງບ້ານ ແລະ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າຢູ່ 16 ຈຸດຂອງເມືອງໄຊບົວທອງ, ມີຜູ້ເຂົ້າຮ່ວມທັງໝົດ1.731 ເທື່ອຄົນ, ຍິງ 630 ເທື່ອຄົນ, ໂດຍຜ່ານການສັງລວມການຮັບເອົາຄຳຄິດ-ຄຳເຫັນ ແລະ ຄຳສະເໜີຂອງປະຊາຊົນຈຳນວນ 16 ຈຸດ, ນັ້ນເປັນຄຳສະເໜີທີ່ໄດ້ຕິດພັນກັບ 3 ຂົງເຂດຄື: ຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດ ປກຊ-ປກສ.

ສະນັ້ນ, ໃນທ້າຍເດືອນ 30 ສິງຫາ 2024 ທີ່ສຳນັກງານເມືອງໄຊບົວທອງ, ໄດ້ຈັດກອງປະຊຸມຮ່ວມລະຫວ່າງ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງກັບອົງການປົກຄອງເມືອງໄຊບົວທອງ ໂດຍການເປັນປະທານຮ່ວມຂອງທ່ານ ບຸນທະວີ ພິລາວັນ ຫົວໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງໄຊບົວທອງ ແລະ ທ່ານ ສາຍຄຳ ພະໄຊສິດທິເດດ ເຈົ້າເມືອງໄຊບົວທອງ ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງເຂົ້າຮ່ວມມີ ທ່ານ ນາງ ຖາວອນ ໄຊຍະສອນ ສສຂ ປະຈຳເຂດເລືອກຕັ້ງເມືອງ, ມີບັນດາ ທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ ແລະ ຫົວໜ້າຫ້ອງການອ້ອມຂ້າງເມືອງ, ກຳລັງ ປກຊ-ປກສ ເມືອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງກອງປະຊຸມຄັ້ງນີ້ແມ່ນເພື່ອສະຫຼຸບຕີລາຄາຄືນການເຄື່ອນໄຫວພົບປະ ແລະ ການຄົ້ນຄວ້າປຶກສາຫາລືປະກອບຄຳຄິດ-ຄຳເຫັນ, ພິຈາລະນາເອົາບັນດາຄຳສະເໜີ, ຄຳຮ້ອງ ແລະ ບັນຫາຂໍ້ຂັດຂ້ອງຫມອງໃຈຕ່າງໆຂອງອົງການປົກຄອງເມືອງ, ບ້ານ ແລະພໍ່ແມ່ປະຊາຊົນໃນເຂດເລືອກຕັ້ງແຕ່ລະຈຸດທີ່ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ສະມາຊິກສະພາປະຊາຊົນແຂວງຄຳມ່ວນປະຈຳເຂດເລືອກຕັ້ງເມືອງໄຊບົວທອງ,ທີ່ໄດ້ສຳເລັດໃນການເຄື່ອນໄຫວພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງທີຕິດພັນກັບການຈັດຕັ້ງຜັນຂະຫຍາຍໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະພາ 2 ຂັ້ນ.

ທັງນີ້ກໍ່ເພື່ອເປັນການຄົ້ນຄ້ວາປຶກສາຫາລື ແລະ ເປັນເອກະພາບໃນການສະເໜີຕໍ່ໄປຍັງອົງການອຳນາດລັດຂັ້ນຕ່າງໆໃນການນຳໄປຄົ້ນຄວ້າ-ແກ້ໄຂຄຳສະເໜີ ຕາມພາລະບົດ ສິດ, ໜ້າທີ່ແລະຕາມລະບຽບກົດໝາຍ.

ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດພິທີປາຖະກາຖາເຜີຍແຜ່ມູນເຊື້ອວັນສຳຄັນປະຫວັດສາດຂອງຊາດ, ຂຶ້ນໃນຕອນເຊົ້າຂອງວັນທີ 6 ກັນຍາ 2024 ທີ່ສະພາປະຊາຊົນແຂວງຄຳມ່ວນ ໂດຍເປັນກຽດປາຖະກາຖາຂອງທ່ານ ນາງ ບັງອອນ ໄຊຍະສິດ ກຳມະການປະຈຳພັກແຂວງຮອງປະທານສະພາປະຊາຊົນແຂວງຄຳມ່ວນ,ເຂົ້າຮ່ວມມີທ່ານບົວພັນ ແສງຈັນ ຮອງປະທານສະພາປະຊາຊົນຂັ້ນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ, ຫົວໜ້າຂະແໜງ/ຮອງຫົວໜ້າຂະແໜງ ແລະ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງຄຳມ່ວນ ເຂົ້າຮ່ວມຮັບຟັງ.

ໃນພິທີທ່ານນາງບັງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງ ໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຂອງວັນສ້າງຕັ້ງລັດຖະທຳມະນູນໂດຍສະເພາະແມ່ນ ສະພາບແວດລ້ອມແຫ່ງການກຳເນີດ ລັດຖະທຳມະນູນຂອງສປປລາວພາຍຫຼັງປະເທດຊາດໄດ້ຮັບການສະຖາປະນາເປັນ ສປປລາວພັກໄດ້ວາງແນວທາງ ແລະ ນຳພາປະຊາຊົນປະຕິບັດສອງຫນ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ປີ 1986 ພັກໄດ້ວາງແນວທາງປ່ຽນແປງໃໝ່ຮອບດ້ານໂດຍເລີ່ມຈາກການປ່ຽນແປງທາງດ້ານເສດຖະກິດ, ຫັນຈາກການຄຸ້ມຄອງລວມສູນບໍລິຫານເກື້ອກູນໄປສູ່ການຄຸ້ມຄອງຕາມກົນໄກຕະຫຼາດທີ່ມີການໄລ່ລຽງເສດຖະກິດແລະມີການດັດສົມຂອງລັດ. ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການແຫ່ງການປ່ຽນແປງໃໝ່ດັ່ງກ່າວຈຶ່ງມີຄວາມຈຳເປັນຕ້ອງຫັນໄປສູ່ການຄຸ້ມຄອງລັດດ້ວຍລັດຖະທຳມະນູນ ແລະ ກົດໝາຍຢ່າງເປັນເອກະພາບ. ດ້ວຍເຫດນັ້ນກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນສູງສຸດ ຊຸດທີ II (ປີ1991) ຈຶ່ງໄດ້ພິຈາລະນາຮັບຮອງເອົາລັດຖະທຳມະນູນສະບັບທຳອິດຂອງ ສປປລາວ ເຊິ່ງໄດ້ປະກາດໃຊ້ໃນວັນທີ 15/8/1991. ໂອກາດດຽວກັນທ່ານກໍໄດ້ຍົກໃຫ້ເຫັນເຖິງມູນເຊື້ອການເຕີບໃຫຍ່ຂະຫຍາຍຕົວຂອງສື່ມວນຊົນ ໃນຖານະເປັນກະບອກສຽງຂອງອົງການຈັດຕັ້ງ ພັກ-ລັດ ແລະ ສັງຄົມໃນການໂຄສະນາ, ສຶກສາອົບຮົມແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ປຸກລະດົມນ້ຳໃຈຮັກຊາດ, ສະໜອງຂໍ້ມູນຂ່າວສານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ ແລະ ສາລະຄວາມຮູ້ຕ່າງໆ, ປະກອບສ່ວນຕ້ານປະກົດການຫຍໍ້ທໍ້ໃນສັງຄົມ, ຕ້ານຕິຖ້ອຍທຳນອງທີ່ບິດເບືອນຄວາມເປັນຈິງຂອງພວກຄົນບໍ່ດີ, ພ້ອມທັງເປັນຂົວຕໍ່ລະຫວ່າງພັກ ກັບປະຊາຊົນ, ເປັນເວທີເສີມຂະຫຍາຍປະຊາທິປະໄຕ ປະຊາຊົນ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ.ຕະຫຼອດໄລຍະ74ປີຜ່ານມາວຽກງານສື່ມວນຊົນແມ່ນມີການເຕີບໃຫຍ່ຂະຫຍາຍຕົວຢ່າງໜັກແໜ້ນ, ສາມາດນຳໃຊ້ເຕັກໂນໂລຊີເຂົ້າໃນການເກັບກຳ ແລະບັນທຶກຂໍ້ມູນ ລວມເຖິງມີສື່ໃໝ່ໆເກີດຂຶ້ນເປັນຕົ້ນແມ່ນສື່ອອນລາຍ ທີ່ເປັນເງື່ອນໄຂເຮັດໃຫ້ການເຜີຍແຜ່ຂໍ້ມູນຂ່າວສານ ມີຄວາມສະດວກ, ກວ້າງຂວາງ ແລະ ມີຄວາມວ່ອງໄວ. ຈາກນັ້ນ ທ່ານ ບົວພັນ ແສງຈັນ ໄດ້ທວນຄືນປະຫວັດ ແລະ ຜົນງານທີ່ພົ້ນເດັ່ນຂອງທ່ານປະທານ ສຸພານຸວົງ ໂດຍຫຍໍ້ວ່າ: ທ່ານປະທານ ສຸພານຸວົງ ໄດ້ເຂົ້າສຶກສາຊັ້ນປະຖົມຢູ່ ຫຼວງພະບາງ, ຊັ້ນມັດທະຍົມຢູ່ ນະຄອນຫຼວງຮ່າໂນ້ຍ ສສ.ຫວຽດນາມ ແລະ ສຶກສາຕໍ່ລະດັບປະລິນຍາຕີສາຂາວິສະວະກຳກໍ່ສ້າງ ແລະ ຂົວທາງຢູ່ນະຄອນຫຼວງປາຣີປະເທດຝຣັ່ງ, ໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ຢ່າງພິລະອາດຫານ ຕ້ານຈັກກະພັດລ່າເມືອງຂຶ້ນ ແບບເກົ່າ ແລະ ແບບໃໝ່. ປະທານ ສຸພານຸວົງ ເປັນເຊື້ອເຈົ້າ ເປັນເຊື້ອກະສັດ ເປັນຜູ້ນຳທີ່ມີຄວາມຈົງຮັກພັກດີຕໍ່ອຸດົມການປະຕິວັດຢ່າງເດັດຂາດ, ຕໍ່ສູ້ຢ່າງກ້າແກ່ນພິລະອາດຫານ ຍາມໃດກໍໄດ້ຍົກສູງສະຕິລະບຽບວິໄນຕໍ່ການຈັດຕັ້ງ, ນັບຖື ໝູ່ຄະນະ, ເອື້ອເຟື້ອຮັກແພງ ມີດສະຫາຍຢ່າງຈິງໃຈ, ມີທັດສະນະຫຼັກໝັ້ນອັນໜັກແໜ້ນ ແລະນ້ຳໃຈເສຍສະຫຼະອັນສູງສົ່ງເພື່ອຊາດ ເພື່ອປະຊາຊົນ, ເປັນໜຶ່ງໃນບັນດາຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກຂອງປະຊາຊົນລາວເຜົ່າຕ່າງໆ, ທ່ານໄດ້ອຸທິດໝົດຈິດໝົດໃຈ,ຄວາມສາມາດແລະຫົວຄິດປະດິດສ້າງຂອງຕົນໃຫ້ແກ່ພາລະກິດປົກປັກຮັກສາແລະສ້າງສາປະເທດຊາດ ເພື່ອເອກະລາດ, ອະທິປະໄຕຂອງຊາດແລະຄວາມສົມບູນພູນສຸກ ຂອງປະຊາຊົນລາວບັນດາເຜົ່າ; ແລະປະຫວັດຄວາມເປັນມາ 02 ວັນສຳຄັນຂອງຊາດຄື: ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 74 ປີ (13 ສິງຫາ 1950-13 ສິງຫາ 2024) ແລະ ວັນຍຶດອຳນາດ ຄົບຮອບ 49 ປີ (23 ສິງຫາ 1975-23 ສິງຫາ 2024).

ໃນຕອນທ້າຍຂອງພິທີ ທ່ານ ນາງ ບັງອອນ ໄຊຍະສິດ ກໍໄດ້ກ່າວມີຄຳເຫັນໂອ້ລົມ ເຊິ່ງໄດ້ເນັ້ນໃຫ້ບັນດາສະຫາຍສະມາຊິກພັກກໍຄືພະນັກງານຫຼັກແຫຼ່ງ, ພະນັກງານໜຸ່ມນ້ອຍຮຸ່ນສືບທອດຈຶ່ງໄດ້ເພີ່ມທະວີນ້ຳໃຈຮັກຊາດອັນສູງສົ່ງ, ເສີມຂະຫຍາຍມູນເຊື້ອຂອງພັກປະຊາຊົນປະຕິວັດລາວ ປົກປັກຮັກສາໝາກຜົນຂອງການປະຕິວັດພ້ອມ ພາຍໃຕ້ການນຳຂອງພັກ, ມາສູ່ປະຊາຊົນໃຫ້ມີຄວາມສະຫງົບສຸກ, ສັງຄົມມີຄວາມສີວິໄລ ແລະ ຍຸດຕິທຳເປັນກ້າວໆ.

## ສສຊ ແລະ ສສຂ ປະຈຳເມືອງ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ແຂວງວຽງຈັນ



(ສພຊ) ການລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງວຽງຈັນ ຊຸດທີII ຢູ່ເມືອງທຸລະຄົມແຂວງວຽງຈັນເລີ່ມແຕ່ທ້າຍເດືອນສິງຫາ 2024 ເປັນຕົ້ນມາ, ຄະນະຜູ້ແທນລົງເຄື່ອນໄຫວໃນເທື່ອນີ້ມີທ່ານ ບຸນສອນ ເພັດລາວັນ ຮອງເລົາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ, ສສຊ ເຂດ10, ທ່ານນາງຈັນທະຄອນ ສີອຳພອນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ສສຂ ປະຈຳເມືອງ, ທ່ານ ບຸນເລີດ ສີຫາປັນຍາ ຮອງເລຂາພັກເມືອງ, ສສຂ ປະຈຳເມືອງ ແລະ ທ່ານ ນາງ ຈັນທະມາໄລ ບຸນໄຊທິບ ຄະນະປະຈຳພັກເມືອງ, ສສຂ ປະຈຳເມືອງ, ມີຄະນະຕິດຕາມຈາກຂັ້ນແຂວງ, ຈາກເມືອງທຸລະຄົມ ແລະ ຄະນະກຸ່ມບ້ານ ຮ່ວມລົງເຄື່ອນໄຫວ, ພົວພັນປະສານງານ ແລະ ອຳນວຍຄວາມສະດວກໃຫ້.

ຈຸດທີ່ຄະນະຜູ້ແທນລົງເຄື່ອນໄຫວ ປະກອບມີທັງໝົດ 8 ຈຸດ, ຄື: ຢູ່ສະໂມສອນເມືອງໄດ້ເຕົ້າໂຮມຄະນະພັກ, ຫົວໜ້າຫ້ອງການ, ມີນາຍ ແລະ ພົນທະຫານ,ຕຳຫຼວດແລະພະນັກງານ-ລັດຖະກອນ ແລະ ການຈັດຕັ້ງບ້ານ 6 ບ້ານເທດສະບານເຂົ້າຮ່ວມ; ຢູ່ບ້ານນາເງິນ, ບ້ານໂພນຄຳ, ບ້ານຕານປ່ຽວ, ບ້ານໜອງພົງ, ເຂື່ອນໄຟ້ານ້ຳມັງ 3, ບ້ານນາລ້າ ແລະ ບ້ານໂພນແຮ່.

ການລົງເຄື່ອນໄຫວຢູ່ແຕ່ລະຈຸດ ຄະນະຜູ້ແທນໄດ້ຜັດປ່ຽນກັນເຜີຍແຜ່ເອກະສານຜົນສຳເລັດຂອງກອງປະຊຸມ, ໂດຍສັງລວມເອົາເນື້ອໃນທີ່ສຳຄັນ, ກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ພາກທີ I ໄດ້ຮັບ

ອ່ານຕໍ່ໜ້າ 8

# ກຳມະບານ ແລະ ຊາວໜຸ່ມ ສພຂ ບໍ່ແກ້ວ ທາບທາມບຸກຄະລາກອນ



(ສພຂ) - ອີງຕາມແຜນການກະກຽມດຳເນີນກອງປະຊຸມໃຫຍ່ກຳມະບານຮາກຖານສະພາປະຊາຊົນແຂວງ (ສພຂ) ຄັ້ງທີ II ສະບັບເລກທີ 09/ກບຖ.ສພຂ, ລົງວັນທີ 28 ສິງຫາ 2024; ອີງຕາມ ມະຕິຕົກລົງວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຮັບຜິດຊອບກະກຽມກອງປະຊຸມໃຫຍ່ກຳມະບານຮາກຖານສະພາປະຊາຊົນແຂວງ ຄັ້ງທີ III ສະບັບເລກທີ 27 ໜພ.ສພຂ, ລົງວັນທີ 20 ສິງຫາ 2024, ໃນວັນທີ 4 ກັນຍາ 2024, ຢູ່ທີ່ສະພາປະຊາຊົນແຂວງບໍ່ແກ້ວ ໄດ້ເປີດກອງປະຊຸມທາບທາມບຸຄະລາກອນໂຄງປະກອບຄະນະກຳມະບານຮາກຖານ ສພຂ; ໂດຍພາຍໃຕ້ການເປັນຄະນະປະທານຮ່ວມຂອງສະຫາຍ ພົອ. ທຸມແພງ ອິນທະຈັກ ຮອງເລຂາໜ່ວຍພັກສະພາປະຊາຊົນແຂວງແລະທ່ານ ບຸນພັດສີສົມບັດປະທານກຳມະບານຮາກຖານ ສພຂ ມີບັນດາຮອງປະທານ, ຄະນະປະທານ ແລະ ສະມາຊິກກຳມະບານເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງກອງປະຊຸມຄັ້ງນີ້ເພື່ອທາບທາມເອົາບຸກຄະລາກອນຜູ້ທີ່ມີເງື່ອນໄຂຄົບຖ້ວນເຂົ້າສະໝັກຄະນະກຳມະບານຮາກຖານຊຸດໃໝ່ ຫຼັງຈາກນັ້ນ, ໄດ້ຜ່ານມະຕິແຕ່ງຕັ້ງຄະນະຊີ້ນຳລວມ ແລະບັນດາອະນຸກຳມະການຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມ; ຜ່ານມາດຖານເງື່ອນໄຂ ພ້ອມທັງຜ່ານລາຍຊື່ບຸຄະລາກອນທີ່ສະໝັກເຂົ້າໂຄງປະກອບກອງປະຊຸມໃຫຍ່ກຳມະບານຮາກຖານສພຂແລະແນະນຳວິທີການທາບທາມ ພ້ອມໃຊ້ສິດ ໃນການເລືອກເອົາບຸກຄະລາກອນຕາມລາຍຊື່ທີ່ຄະນະພັກໄດ້ກຳນົດໄວ້.

ໂອກາດນີ້, ທ່ານ ພົອ. ທຸມແພງ ອິນທະຈັກ ຮອງເລຂາໜ່ວຍພັກ ສພຂ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ພ້ອມທັງໃຫ້ທິດຊີ້ນຳ.

ວັນທີ 5 ກັນຍາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໜ່ວຍຊາວໜຸ່ມ ສພຂ ໄດ້ເປີດກອງປະຊຸມດຳເນີນຊີວິດການເມືອງ ແລະ ທາບທາມໂຄງປະກອບບຸກຄະລາກອນໜ່ວຍຮາກຖານຊາວໜຸ່ມຂຶ້ນ ໂດຍພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ນາງ ດາວ ໄຊເສດຖາ ເລຂາໜ່ວຍພັກ, ຮອງປະທານ ສພຂ ແລະ ສະຫາຍ ບຸນຈັນ ຫຼວງລືໄຊ ເລຂາໜ່ວຍຊາວໜຸ່ມ ສພຂ, ມີບັນດາຄະນະໜ່ວຍ ແລະສະມາຊິກຊາວໜຸ່ມ, ແຂກຖືກເຊີນຈາກອົງການຊາວໜຸ່ມແຂວງ ເຂົ້າຮ່ວມ.

ຈຸດປະສົງ, ກອງປະຊຸມຄັ້ງນີ້ແມ່ນເພື່ອ ຜ່ານຮ່າງບົດລາຍງານການເມືອງທັງສອງພາກ, ຜ່ານບົດສຳຫຼວດການນຳພາລວມ, ຜ່ານບົດສຳຫຼວດບຸກຄົນສະມາຊິກຊາວໜຸ່ມ ສພຂ, ຜ່ານມາດຖານເງື່ອນໄຂຜູ້ລົງສະໝັກ ເຂົ້າໃນ ຄະນະຊຸດໃໝ່ ແລະ ດຳເນີນການທາບທາມຄັດເລືອກເອົາບຸຄະລາກອນທີ່ຄະນະພັກ ແລະຄະນະໜ່ວຍຊາວໜຸ່ມ ສພຂ ເຫັນດີຕົກລົງເປັນເອກະພາບ. ໂອກາດນີ້ຍັງໄດ້ຮັບຟັງການມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຈາກເລຂາໜ່ວຍພັກ ໂດຍສະຫາຍເລຂາໜ່ວຍພັກໄດ້ມີຄຳໂອ້ລົມໃຫ້ສະມາຊິກຊາວໜຸ່ມ ສພຂ ທຸກສະຫາຍຈົ່ງໄດ້ເອົາໃຈໃສ່ໃນວຽກງານວິຊາສະເພາະ, ວຽກງານຂະບວນການຊາວໜຸ່ມ ແລະ ວຽກງານ 4 ບຸກແລ້ວ ແມ່ນຕ້ອງເອົາໃຈໃສ່ ແລະ ບຸກບືນທາງດ້ານການເມືອງ-ແນວຄິດ, ດ້ານການຈັດຕັ້ງແລະລະບຽບວິໄນ, ດ້ານການນຳພາ ແລະ ແບບແຜນວິທີເຮັດວຽກ, ດ້ານການຮັບຜິດຊອບຕໍ່ໜ້າທີ່ການເມືອງ.

## ສສຊ...

(ຕໍ່ຈາກໜ້າ 7)

ຟັງກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 6 ເດືອນຕົ້ນປີ 2024, ການເຕີບໂຕເສດຖະກິດ, ການປະຕິບັດແຜນງົບປະມານ, ການປະຕິບັດແຜນເງິນຕາ, ຂົງເຂດວັດທະນະທຳ-ສັງຄົມ, ຂົງເຂດສິ່ງແວດລ້ອມ ແລະ ວິທະຍາສາດເຕັກໂນໂລຊີ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ທິດທາງແຜນວຽກຈຸດສຸມແລະມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນທ້າຍປີ 2024; ພາກທີ II ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງອົງການກວດສອບແຫ່ງລັດ; ພາກທີ III ຕີລາຄາການປະຕິບັດວຽກງານຂອງສະພາແຫ່ງຊາດ; ພາກທີ IV ວຽກງານການສ້າງ ແລະປັບປຸງກົດໝາຍ.

ສຳລັບຜົນສຳເລັດກອງປະຊຸມສະໄມສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໄດ້ຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງວຽງຈັນ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 202; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ແລະທິດທາງແຜນການ ປະຈຳປີ 2024; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ການລາຍງານ, ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5ປີ (2021-2025) ແລະແຜນການເຄື່ອນໄຫວປະຈຳປີ 2023 ຂອງອົງການກວດສອບປະຈຳພາກກາງ; ຮັບຟັງການລາຍງານ, ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ກາງສະໄໝ 5 ປີ (2021-2025) ແລະ ການເຄື່ອນໄຫວປະຈຳປີ 2023 ຂອງອົງການກວດກາລັດແຂວງວຽງຈັນ; ການລາຍງານ, ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການໄອຍະການແຂວງ; ການລາຍງານ, ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024.

**(ບູລາຕີ ແສນທະວົງ)**

# ສສຊ ແລະ ສສຂ ຫົວພັນ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7



(ສພຂ) - ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສສຊ)ແລະສະພາປະຊາຊົນຂັ້ນແຂວງ (ສສຂ) ໃນນາມເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ແລະ ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ຂອງແຂວງ.

ລະຫວ່າງວັນທີ 4-6 ກັນຍາ 2024 ນີ້, ສສຊ ແລະ ສສຂ ແຂວງຫົວພັນ ໄດ້ຈັດພິທີເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫົວພັນ ຊຸດທີ II ນຳໂດຍ ທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ; ພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແລະ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຊຳເໜືອ, ເມືອງຊຽງຄໍ້ ແລະເມືອງຫົວເມືອງເຊິ່ງເຄື່ອນໄຫວຢູ່ 3 ຈຸດຄື: ສະພາປະຊາຊົນແຂວງ; ບ້ານໂພນທອງ (ເມືອງຊຽງຄໍ້) ແລະ ບ້ານອຸໄທ (ເມືອງຫົວເມືອງ). ເຂົ້າຮ່ວມຮັບຟັງມີບັນດາທ່ານຄະນະປະຈຳ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ, ຮອງຫົວໜ້າພະແນການ, ອົງການທຽບເທົ່າຂັ້ນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂົງເຂດວັດທະນະທຳ-ສັງຄົມ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າທັງສອງບ້ານເຂົ້າຮ່ວມ 323 ທ່ານ ຍິງ 142 ທ່ານ.

ການເຜີຍແຜ່ຄັ້ງນີ້, ບັນດາທ່ານ ສສຊ ແລະ ສສຂ ໄດ້ພັດປ່ຽນກັນນຳເອົາເນື້ອໃນຈິດໃຈຜົນສຳເລັດຂອງ 2 ກອງປະຊຸມດັ່ງກ່າວ ສະເໜີໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນແຕ່ວັນທີ 10 ມິຖຸນາ ຫາວັນທີ 02 ກໍລະກົດ 2024 ລວມ 17 ວັນເຊິ່ງໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບ; ກົດໝາຍປັບປຸງ 11 ສະບັບ; ວຽກງານສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາເທື່ອທີ 7 ແລະແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8 ແລະວຽກງານອື່ນໆ ຂອງລັດຖະບານ ແລະ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ໄດ້ດຳເນີນ ແຕ່ວັນທີ 30 ກໍລະກົດ ຫາ ວັນທີ 01 ສິງຫາ 2024 ລວມ 02 ວັນເຄິ່ງ ເຊິ່ງໄດ້ພິຈາລະນາ ແລະຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 06 ເດືອນຕົ້ນປີ ແລະ ທິດທາງແຜນການວຽກງານຈຸດສຸມ 6 ເດືອນທ້າຍປີ 2024 ຂອງອົງການປົກຄອງແຂວງ; ບົດລາຍງານ ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງແຂວງ; ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະທິດທາງແຜນການ 6 ເດືອນທ້າຍປີ 2024 ຂອງສະພາປະຊາຊົນແຂວງແລະພິຈາລະນາ-ຮັບຮອງເອົາການເລືອກຕັ້ງບຸກຄະລາກອນ ຂອງສະພາປະຊາຊົນແຂວງຫົວພັນ ລາຍງານຕໍ່ບັນດາທ່ານພະນັກງານ-ລັດຖະກອນ ໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ. ພ້ອມທັງເປີດໂອກາດໃຫ້ຜູ້ເຂົ້າຮ່ວມສະເໜີຂໍ້ຂ້ອງໃຈເພື່ອເປັນການແລກປ່ຽນບັນຫາຕ່າງໆ ທີ່ຕິດພັນກັບການດຳລົງຊີວິດທີ່ຍັງພົບຄວາມຫຍຸ້ງຍາກ ເພື່ອເປັນຂໍ້ມູນໃຫ້ ສສຊ ແລະ ສສຂ ນຳໄປຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາແລະແກ້ໄຂຕາມຄວາມເໝາະສົມ. ພ້ອມທັງໂອ້ລົມ ແລະ ຊຸກຍູ້ໃຫ້ພໍ່ແມ່ປະຊາຊົນປັບປຸງແບບແຜນການດຳລົງຊີວິດຕາມແບບໃໝ່ ແລະເອົາໃຈໃສ່ສ້າງເສດຖະກິດຄອບຄົວດ້ວຍການປູກຝັງ, ລ້ຽງສັດ ແລະ ບໍລິການອື່ນ ໃຫ້ກາຍເປັນສິນຄ້າ ທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອສ້າງລາຍຮັບເຂົ້າສູ່ຄອບຄົວ, ເຮັດໃຫ້ໃຫ້ຄອບຄົວກໍຄືພາຍໃນບ້ານຫຼຸດພົ້ນອອກຈາກຄວາມທຸກຍາກ, ພ້ອມກັນສາມັກຄີ ຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ, ມີຄວາມກ້າຫານໃນການຊອກຮູ້ຫາຮຽນເອົາປະສົບການໃໝ່ມາພັດທະນາປະເທດຊາດບ້ານເມືອງຂອງຕົນເອງ ໃຫ້ມີຄວາມກ້າວໜ້າຂຶ້ນເລື້ອຍໆ.

ໂອກາດດຽວກັນ, ທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຍັງໄດ້ມອບຄອມພິວເຕີ (Notbook) 1 ໜ່ວຍ ໃຫ້ ສສຂ ປະຈຳເຂດເລືອກຕັ້ງເມືອງຊຽງຄໍ້ ແລະມອບຜ້າຫົ່ມ, ເຄື່ອງນຸ່ງຫົ່ມ, ອຸປະກອນການຮຽນ (ປຶ້ມຂຽນ 3 ເປົາ ແລະ ບິກຂຽນ 2 ກັບ) ມູນຄ່າລວມທັງໝົດ 14.552. 000 ກີບ ມອບໃຫ້ຄອບຄົວທຸກຍາກຢູ່ແຕ່ລະຈຸດທີ່ລົງເຜີຍແຜ່ອີກດ້ວຍ.




# ສຸກງ່າໃດ ກິນງ່ານັ້ນ

# ດົ້ນກິບເມກ

ຄຳເວົ້າທີ່ວ່າ: ສຸກງ່າໃດກິນງ່ານັ້ນ ຜູ້ຂຽນໄດ້ຍິນມາດົນແລ້ວ ເຊິ່ງຄຳເວົ້າດັ່ງກ່າວເປັນທັງຄະຕິເຕືອນໃຈ ເປັນທັງຄ່ານິຍົມທີ່ບາງຄົນ ຫຼື ຄົນບາງກຸ່ມໃນສັງຄົມ ໄດ້ເຕັ້ນແລ່ນຕາມຕັກຕວງປະໂຫຍດ-ຊອກກຳໄລເຂົ້າຖົງ ເຊິ່ງໄປບວກໃສ່ກັບຄຳເວົ້າທີ່ວ່າ: ນ້ຳຂຶ້ນໃຫ້ຟ້າວຕັກ ຫຼື ໃຜມີມືຍາວສາວໄດ້ສາວເອົາ-ໃຜມືສັ້ນມືນ້ອຍໃຫ້ຄ່ອຍຢືບຢອມ ຖ້າວ່າຜູ້ມີບົດບາດໃນສັງຄົມຫາກຖືເປັນຄ່ານິຍົມສູງແລ້ວກໍພາໃຫ້ຫຼາຍຄົນເດີນແລ່ນຕາມ.

ຄຳເວົ້າວ່າ: ສຸກງ່າໃດ ກິນງ່ານັ້ນ ເປັນຄຳເຫັນຕໍ່ກອງປະຊຸມຜູ້ບໍລິຫານການສຶກສາ ທີ່ສູນຮ່ວມມືສາກົນຍີ່ປຸ່ນ ຂອງທ່ານ ທອງລຸນ ສີສຸລິດ ປະທານປະເທດເຊິ່ງມີຫຼາຍປະເດັນເພິ່ນໄດ້ຍົກມາຕັກເຕືອນ-ຊີ້ທາງໃຫ້ເຫັນຜົນໄດ້-ຜົນເສຍຂອງການຫຼົງຍຶດຕິດຄ່ານິຍົມຜິດໆບາງອັນທີ່ພາໃຫ້ສັງຄົມແລ່ນຕາມຈົນກາຍເປັນສິ່ງທີ່ບໍ່ປາຖະໜາຂອງສັງຄົມ ສຸກງ່າໃດ ກິນງ່ານັ້ນ ເພິ່ນວ່າເປັນຄ່ານິຍົມທີ່ບໍ່ເປັນໂຕຂອງຕົນເອງ (ລັດທິສວຍໂອກາດ) ມີແຕ່ຂໍກັບຂໍແມ່ນຄວນຫັນປ່ຽນ ສ້າງຄ່ານິຍົມເພິ່ງຕົນເອງ-ຮັກສາກຽດສັກສີຂອງຊາດຕົນໃຫ້ຫຼາຍ, ຄ່ານິຍົມອື່ນຈາກກະແສໂລກພາຍນອກກໍກຳລັງບຸກເຂົ້າມາທ້າທາຍຕໍ່ການຮັກສາປະເພນີ-ຮີດຄອງອັນດີງາມຂອງຊາດຢ່າງໜ້າເປັນຫ່ວງ.

ເພິ່ນຍັງເນັ້ນໜັກຕື່ມວ່າ: ເຖິງເວລາແລ້ວທີ່ພວກເຮົາຕ້ອງຫັນຄ່ານິຍົມຜິດໆຢູ່ປັດຈຸບັນ ໄປສູ່ຄ່ານິຍົມທີ່ຖືກຕ້ອງໃຫ້ໄວເຊັ່ນ: ຄ່ານິຍົມເຫັນແຕ່ໄດ້ປະລິນຍາໃບປະກາດ, ວິທະຍາຖານະ ມີໄວ້ເອ້ໄວ້ອວດ ຈະໄດ້ມາດ້ວຍວິທີໃດກໍຕາມຂໍແຕ່ໄດ້ມາ ເຊິ່ງຈະມີຄຸນຄ່າຕ່ຳ, ຜູ້ມອບກໍສືອາຍໆ ຜູ້ຮັບກໍຍິ້ມແບບເຂີນໆ ສຸດທ້າຍໄປເຮັດຫຍັງກໍບໍ່ໄດ້ຜົນ... ຄ່ານິຍົມແບບສະເຫວີຍສຸກບາງທີກໍຢູ່ບົນຄວາມທຸກຂອງຄົນອື່ນ,ທ່ານປະທານປະເທດເພິ່ນຍັງກ່າວເຖິງບຸກຄົນທີ່ຄວນມີ5ປະເພດຄື:ຮັກຊາດດູດດື່ມ, ສະແຫວງຫາຄວາມຮູ້, ຮູ້ເບິ່ງຕົນເອງ ແກ້ໄຂຈຸດອ່ອນ, ດຸໝັ່ນຂະຫຍັນ ແລະ ຮູ້ຈັກປະຢັດ-ອົດອອມ, ບໍ່ຟຸມເຟືອຍ (ຝ່າຍສຶກສາຕ້ອງສ້າງຄົນປະເພດນີ້ໃຫ້ຫຼາຍ) ຄວາມຈຳເປັນສ້າງຄົນໃຫ້ໄດ້ຊັບພະຍາກອນມະນຸດທີ່ມີຄຸນຄ່າ, ມີຄວາມຮູ້-ຄວາມສາມາດ, ຄຸນສົມບັດສິນທຳ, ຄຸນນະທຳ, ມະນຸດສະທຳ, ຍຸຕິທຳ, ສຸດຈະລິດທຳ... ເຊິ່ງທັງໝົດນີ້ ທ້າທາຍຕໍ່ຜູ້ບໍລິຫານການສຶກສາໄດ້ຄົ້ນຄວ້າວິໄຈຫາທາງອອກ !.








# ປັດໄຈ ຫຼື ປັດໃຈ

"ການສຶກສາແມ່ນປັດໄຈທີ່ພາໃຫ້ເກີດຄວາມຮູ້ຄວາມສາມາດ." ອາຈານສີທາກ່າວຕໍ່ສິດດ້ວຍສຽງໜັກແໜ້ນ.

"ໝາກໄມ້ຊະນິດຕ່າງໆເປັນປັດໄຈໃນການຜະລິດນ້ຳໝາກໄມ້." ລຸງຄຳອະທິບາຍຕອນໜຶ່ງໃຫ້ຫຼານຟັງ.

"ຢາປົວພະຍາດເປັນປັດໄຈໜຶ່ງທີ່ຂາດບໍ່ໄດ້ສຳລັບຄົນເຮົາ." ທ່ານໝໍຊຽງດີກ່າວກັບຄົນເຈັບ.

"ຂໍແຜ່ປັດໄຈຈາກພໍ່ແມ່ພີ່ນ້ອງເພື່ອມາສ້າງສິມຂອງວັດບ້ານເຮົາ." ພໍ່ຕູ້ຈັນທາປະກາດອອກໂທລະໂຄ່ງໃຫ້ປະຊາຊົນທີ່ເຂົ້າມາຮ່ວມໄດ້ຍິນກັນທຸກຖ້ວນໜ້າ.

"ພາສາປາລີ-ສັນສະກິດ ແມ່ນພາສາທີ່ນອນຢູ່ໃນໝວດພາສາທີ່ວິພັດປັດໄຈ." ອາຈານບຸນມີອະທິບາຍບົດຮຽນວິຊາພາສາປາລີ-ສັນສະກິດໃນພາສາລາວ.

ຈາກຄຳເວົ້າຄຳວ່າເທິງນີ້ ກໍສະແດງໃຫ້ເຫັນວ່າ ປັດໄຈ ມີເຖິງ 5 ຄວາມໝາຍດັ່ງນີ້:

ປັດໄຈ 1 ໝາຍເຖິງ "ເຫດອັນເປັນຫົນທາງໃຫ້ເກີດຜົນ, ຫົນທາງ";

ປັດໄຈ 2 ໝາຍເຖິງ "ອົງປະກອບ, ສ່ວນປະກອບ";

ປັດໄຈ 3 ໝາຍເຖິງ "ສິ່ງທີ່ຈຳເປັນແກ່ຊີວິດ ຄື ເຄື່ອງນຸ່ງ, ອາຫານ, ບ່ອນຢູ່ ແລະ ຢາ ເຊິ່ງມັກເອີ້ນວ່າ ປັດໄຈ 4";

ປັດໄຈ 4 ໝາຍເຖິງ "ເງິນຕາ ທີ່ມັກໃຊ້ກັບພະສົງສາມະເນນ";

ປັດໄຈ 5 ໝາຍເຖິງ "ສ່ວນຕື່ມທ້າຍຄຳສັບເພື່ອສະແດງຄວາມໝາຍ ເຊິ່ງມັກມີຢູ່ໃນພາສາຕະກູນອິນໂດ-ເອີຣົບ".

ຄຳວ່າ "ປັດໄຈ" ນີ້ ເປັນຄຳນາມທີ່ໄດ້ເຄົ້າມາຈາກພາສາປາລີແມ່ນ ປຈຈຍ (ປັຈຈະຍະ). ເມື່ອໄດ້ຮັບເຂົ້າມາໃຊ້ໃນພາສາລາວແລ້ວ ກໍໄດ້ຖືກແປງສຽງ ແລະ ຂຽນໃຫ້ຖືກຕາມຫຼັກອັກຂະຫຼະວິທີຂອງລາວ. ໃນຂັ້ນຕົ້ນ ແມ່ນສະກົດເປັນ "ປັຈຈັຍ" ຕໍ່ມາເມື່ອຫຼັກການສະກົດຄຳບໍ່ໃຫ້ມີຕົວສະກົດພິເສດ ກໍກາຍມາເປັນ "ປັດຈັຍ".

ມາຮອດປັດຈຸບັນ ອີງຕາມປຶ້ມໄວຍາກອນລາວ ປີ 2000 ແລະໄວຍາກອນລາວ ປີ 2020 ການສະກົດຄຳນີ້ ກໍກາຍເປັນ "ປັດໄຈ". ເພາະຫຼັກການໃຊ້ສະຫຼະຂອງໄວຍາກອນລາວປັດຈຸບັນ ເພິ່ນໃຫ້ໃຊ້ແຕ່ຮູບດຽວ ຄື ໄx (ບໍ່ໃຫ້ໃຊ້ xັຍ), xໍາ (ບໍ່ໃຫ້ໃຊ້ xັມ).

ດັ່ງນັ້ນ, ຈາກເຄົ້າເດີມທີ່ຂຽນເປັນ ປັຈຈັຍ ກໍກາຍເປັນ ປັດຈັຍ ແລະ ປັດໄຈ ຕາມລຳດັບ.

ໂດຍອີງໃສ່ໄວຍາກອນປັດຈຸບັນ ເຮົາຈຶ່ງຂຽນເປັນ "ປັດໄຈ" ທີ່ຖືວ່າເປັນການສະກົດຄຳທີ່ຖືກຕ້ອງ.

ແຕ່ສັງເກດເຫັນວ່າຍັງມີປາກົດການຂຽນເປັນ"ປັດໃຈ"ເຊິ່ງແມ່ນການສະກົດຜິດ. ສາເຫດທີ່ພາໃຫ້ເກີດການຂຽນເປັນ "ປັດໃຈ" ກໍຍ້ອນວ່າພວກເຮົາເຈົ້າຂ້ອຍລຶ້ງນຳຄຳລາວເດີມທີ່ມີຄວາມໝາຍວ່າ "ອະໄວຍະວະຢ່າງໜຶ່ງຂອງຄົນແລະສັດທີ່ຢູ່ທາງໃນຂອງເອິກ" ເຊິ່ງເຄີຍໃຊ້ມາແຕ່ເດີມດາເຄົ້າ. ເມື່ອມາຂຽນຄຳວ່າ "ປັດໄຈ" ທີ່ເປັນຄຳທີ່ໄດ້ຮັບຈາກພາສາອື່ນ ຈຶ່ງມັກຫຼົງໄປໃຊ້ຄຳທີ່ເຮົາລຶ້ງເຄີຍມາກ່ອນ. ດ້ວຍເຫດນັ້ນ, ເວລາຂຽນຄຳນີ້ ເຮົາຕ້ອງໄດ້ຕັ້ງສະມາທິໃນການຂຽນຫຼືພິມໃຫ້ດີໆ ຄັນບໍ່ຊັ້ນ ເວລາພິມອອກມາມັກຈະກາຍເປັນ "ປັດໃຈ".



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຖືກ | ຜິດ |
|---|---|
| ສົກຮຽນ | ຊົກຮຽນ |
| ຊົກມວຍ | ສົກມວຍ |
| ຖອດຖອນບົດຮຽນ | ທອດຖອນບົດຮຽນ |
| ຖ່າຍທອດບົດຮຽນ | ຖ່າຍຖອດບົດຮຽນ |
| ຫຼົບໜີ | ລົບໜີ |
| ລົບເລກ | ຫຼົບເລກ |
| ສິນຄ້າເຫຼົ່ານີ້ | ສິນຄ້າເລົ່ານີ້ |
| ເລົ່ານິທານ | ເຫຼົ່ານິທານ |
| ສະພາແຫ່ງຊາດ | ສະພາແຮ່ງຊາດ |
| ທຸກທໍ່ໃດແຮ່ງຊ້ຳ | ທຸກທໍ່ໃດແຫ່ງຊ້ຳ |




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

2. ເຮັດວຽກຕາມປະຊາຊົນ ວຽກງານອັນໃດກໍຖາມຄວາມເຫັນຂອງປະຊາຊົນ, ປຶກສາຫາລືກັບປະຊາຊົນ, ຊີ້ແຈງອະທິບາຍໃຫ້ປະຊາຊົນເຂົ້າໃຈດີ, ໄດ້ຮັບຄວາມເຫັນພ້ອມຈາກປະຊາຊົນແນວນັ້ນ, ປະຊາຊົນຍັງຍິນດີພ້ອມເຮັດນຳ. ເຮັດແນວຄານລຳຄານໜ້ອຍໜຶ່ງ. ລຳຄານໃຫ້ຜູ້ທີ່ຂີ້ຄ້ານຖ້ອຍຖາມປະຊາຊົນ ແລະ ຂີ້ຄ້ານຊີ້ແຈງອະທິບາຍໃຫ້ປະຊາຊົນ. ແຕ່ວ່າເຮັດ ແນວນັ້ນວຽກການອັນໃດກໍຈະສຳເລັດຢ່າງແນ່ນອນ.

ບາງຄົນເວົ້າວ່າວຽກອັນໃດເຂົາກໍຮັບຜິດຊອບຕໍ່ພັກແລະຕໍ່ລັດຖະບານ. ເວົ້າແນວນັ້ນແມ່ນຖືກຕ້ອງ, ແຕ່ວ່າມັນຖືກຕ້ອງພຽງແຕ່ເຄິ່ງດຽວ, ເຂົາຮັບຜິດຊອບຕໍ່ພັກ, ຕໍ່ລັດຖະບານກໍແມ່ນແລ້ວ ແຕ່ວ່າເຂົາກໍຕ້ອງຮັບຜິດຊອບຕໍ່ປະຊາຊົນອີກດ້ວຍ. ເວົ້າໃຫ້ຖືກແທ້ ຍັງແມ່ນຕ້ອງຮັບຜິດຊອບຕໍ່ປະຊາຊົນຫຼາຍກວ່າຕໍ່ພັກ, ລັດຖະບານອີກຊ້ຳ. ເພາະວ່າພັກ ແລະ ລັດຖະບານກໍແມ່ນເຮັດເພື່ອປະຊາຊົນ ແລະ ຮັບຜິດຊອບຕໍ່ ປະຊາຊົນຕໍ່ພັກ ແລະ ລັດຖະບານອີກຊ້ຳ, ສະນັ້ນຖ້າວ່າພະນັກງານຫາກບໍ່ຮັບຜິດຊອບຕໍ່ປະຊາຊົນແລ້ວ ກໍໝາຍຄວາມວ່າບໍ່ຮັບຜິດຊອບຕໍ່ພັກ ແລະ ຕໍ່ລັດຖະບານ, ໝາຍຄວາມວ່າເອົາປະຊາຊົນໄປຂັດກັບພັກ ແລະ ລັດຖະບານ.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດ

# ເຄັດລັບກຳຈັດກິ່ນປາກ

ໂດຍ: ທິວກະທິ



ບັນຫາທີ່ພາໃຫ້ມີກິ່ນປາກ ແມ່ນເກີດຈາກໂຣກກ່ຽວກັບແຂ້ວ, ແຂ້ວຜ່ອຍເປັນຮູກວ້າງ, ແຂ້ວປອມ ຊະນິດທີ່ຖອດໄດ້ແລ້ວມີເສດອາຫານຕິດຄ້າງ, ການຫຼັ່ງຂອງນໍ້າລາຍໜ້ອຍ ຫຼື ຫຼາຍ ແລະ ຄົນທີ່ສູບຢາ; ນອກຈາກນີ້, ຍັງມີໂຣກປອດ ຫຼື ມະເຮັງປອດ, ໂຣກກ່ຽວກັບລະບົບຍ່ອຍອາຫານ, ໂຣກຂອງລະບົບຂັບຖ່າຍ; ວິທີທົດສອບວ່າຕົນເອງມີກິ່ນປາກ ຫຼື ບໍ່ ແມ່ນໃຫ້ເອົາອຶ້ງມືປິດປາກ ແລະ ດັງ ແລ້ວເປົ່າລົມແຮງໆອອກຈາກປາກ ແລະ ສູດດົມເບິ່ງ ຫຼື ບາງຄົນກໍສາມາດໃຊ້ວິທີແຫຍ່ນິ້ວມື ຫຼື ອາດໃຊ້ນິ້ວມືຖູບໍລິເວນເຫືອກແລ້ວດົມເບິ່ງ.

ກິ່ນປາກແຍກອອກເປັນ 4 ປະເພດຄື: ກິ່ນປາກທີ່ມາຈາກລີ້ນ ຫຼື ກ້ອງລີ້ນ, ເຫືອກ ແລະ ແຂ້ວຜ່ອຍ ຫຼື ເລືອດອອກຕາມຫວ່າງແຂ້ວ, ກິ່ນຈາກແຂ້ວ ແລະ ກິ່ນຈາກຄວັນຢາສູບ; ບໍລິເວນທີ່ພົບກິ່ນປາກເລື້ອຍໆ ແມ່ນລີ້ນ, ເຫືອກ, ແຂ້ວແລະຂອບແຂ້ວ; ແຕ່ຖ້າບໍ່ຢາກມີກິ່ນປາກ ຄວນປະຕິບັດດັ່ງນີ້:

- ຢ່າປ່ອຍໃຫ້ປາກແຫ້ງ ເພາະເວລາປາກແຫ້ງ ຄວາມເຂັ້ມຂຸ້ນຂອງແບັກທີເຣຍໃນປາກຈະເພີ່ມຂຶ້ນເຮັດໃຫ້ເກີດມີ ກິ່ນປາກໄດ້ງ່າຍ.
- ພະຍາຍາມດື່ມນໍ້າຫຼາຍໆ ເພາະວ່ານໍ້າຈະຊ່ວຍລ້າງແບັກທີເຣຍອອກ.
- ຖູແຂ້ວທຸກຄັ້ງຫຼັງຈາກກິນອາຫານແລະຢ່າລືມຖູເຫືອກ, ລີ້ນ ແລະ ກ້ອງລີ້ນນຳ ເພາະເປັນໜຶ່ງສາເຫດຂອງກິ່ນປາກ.
- ໃຊ້ໄໝຂັດແຂ້ວ (ເຊືອກຈີ້ມແຂ້ວ) ມື້ລະ 2-3 ຄັ້ງ.
- ຖ້າບໍ່ສະດວກທີ່ຈະຖູແຂ້ວ ໃຫ້ບ້ວນປາກດ້ວຍນໍ້າລ້າ ຫຼື ນໍ້າຢາບ້ວນປາກ
- ຫຍໍ້າໝາກຝຣັ່ງ (ຊິງອິ້ມ)
- ງົດອາຫານກິ່ນແຮງ ເຊັ່ນ: ກະທຽມ, ຫອມບົ່ວ, ພິກໄທ ແລະ ເນີຍແຂງ (ຊີດ)
- ກິນອາຫານໃຫ້ຄົບ 5 ໝູ່
- ເຊົາສູບຢາ ເພາະການສູບຢານອກຈາກຈະເປັນອັນຕະລາຍຕໍ່ສຸຂະພາບທົ່ວໄປແລ້ວ ຍັງເປັນປັດໄຈເຮັດໃຫ້ເປັນໂຣກເຫືອກ, ເຟັນແຂ້ວອັກເສບຮຸນແຮງຕື່ມອີກ;ພ້ອມນັ້ນ, ກິ່ນຂອງຢາສູບທີ່ຕິດຄ້າງຢູ່ໃນປາກ ປະສົມກັບກິ່ນອື່ນໆ ເຮັດໃຫ້ມີກິ່ນປາກ ແລະ ມີກິ່ນເໝັນທີ່ຮຸນແຮງ.
- ຄວນໄປພົບທັນຕະແພດ ເພື່ອກວດສຸຂະພາບແຂ້ວຢ່າງສະໝໍ່າສະເໝີ ໂດຍບໍ່ຈຳເປັນຕ້ອງລໍຖ້າໃຫ້ມີບັນຫາປາກ ແລະ ແຂ້ວ;

**ຂໍ້ມູນຈາກ: ວາລະສານອັບເດດ**



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສ້ຽມທ້ຽນ

✻ **ຂໍ່**ສະແດງຊົມເຊີຍ ແລະ ຂອບໃຈມາຍັງທຸກພາກສ່ວນທີ່ໃຫ້**ການຊ່ວຍເຫຼືອປະຊາຊົນລາວ**ທີ່ປະສົບອຸທົກກະໄພເຂດ**ພາກເໜືອ** ເພາະໃນປີນີ້ ຖືວ່າຮຸນແຮງທີ່ສຸດ ໃນຮອບຫຼາຍປີຜ່ານມາ ປອງປະຊາພີ່ນ້ອງ ໃນທ້ອງສາຫາ ຍໍຍື່ນແຮງໃຈມາ ດັ່ງດຽວສາຍນໍ້າ ມິດໄມຕີໄກກ້ວາງ ບໍ່ເຫີຍຫາຍເລີນຊາດ ໄຫຼຫຼັ່ງໂຮມສູ່ເບື້ອງ ປະຊາເຊື້ອເຜົ່າລາວ **ເຈົ້າເອີຍ !**

✻ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ອອກແຈ້ງການເຕືອນໄພນໍ້າຖ້ວມຫຼາຍເມືອງໃນທົ່ວປະເທດ ສາເຫດຍ້ອນນໍ້າຂອງ ແລະ ສາຂາເພີ່ມຂຶ້ນຫຼາຍ ຍິ່ງຮອດເຂດອັນຕະລາຍ ເພິ່ນຈຶ່ງໄດ້ປະກາດແຈ້ງ ເຕືອນບອກລະວັງໄພ ໃຫ້ເບິ່ງແຍງອາຄານ ພາຫັງສັດລ້ຽງ ພ້ອມທັງມີສະຕິຕັ້ງ ລະວັງໄພທຸກຢ່າງ ຮັກສາຂອງເຄື່ອງໃຊ້ ຊີວິດພ້ອມຊັບສິນ **ພີ່ນ້ອງເອີຍ!**

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ບ່າພົວ

**ເມຍ:** ບັກຊໍ່ວ.....! ມຶງຢູ່ໃສ

**ປາຍສາຍ:** (ມິດ)..... ຢູ່ວັດ

**ເມຍ:** ບັກເອບຕະໄລ ! ມຶງໄປເຮັດຫຍັງຢູ່ວັດ

**ປາຍສາຍ:** (ມິດ)......ເອີຖື ບອດຢູ່ເດີ

**ເມຍ:** ມຶງໄປບວດຕອນໃດ ຮື!

**ປາຍສາຍ:** (ເລີ່ມໃຈຮ້າຍ) 15 ພັນສາແລ້ວ !

**ເມຍ:** (ເລີ່ມແປກໃຈ ! ຈຶ່ງກົ້ມເບິ່ງເບີໂທ ເປັນເບີໂທຂອງຄູບາໃຫຍ່ຢູ່ວັດ) ຂໍໂທດເດີໂທຜິດ

**ປາຍສາຍ:** ຈະເລີນພອນແມ່ອອກ



## ຄະຕິເຕືອນໃຈ

# ດອກຫຍ້າ

ຊະນະ ຈົ່ງຢ່າປະໝາດ
ສະຫຼາດ ຈົ່ງຢ່າອວດຕົນ

ອາດ ກະວີລາວ

# ສະພາບແວດລ້ອມ ສຳຄັນພຽງໃດ

# ດາວເປັ່ງແສງ

✻ ມະນຸດໃຕ້ລຸ່ມຟ້າ ອາໄສຢູ່ລວມສູນ
ມີການຈູນເຈືອຈານ ຊ່ວຍກັນສັນສ້າງ
ກໍດັ່ງດຽວໂດຍດ້າມ ກັບສັດພັນທະພືດ
ມີການພົວພັນກ່ຽວຂ້ອງ ອາທອນເອື້ອເຊິ່ງກັນ

✻ ຖ້າສະພາບແວດລ້ອມ ເຕັມແຕ່ມົນລະພິດ
ມີກິ່ນອັບ ຫລື ເໝັນ ສາບຄາວກຸຍເປື້ອນ
ກໍເປັນຜົນພອຍໃຫ້ ສູນເສຍສຸຂະພາບ
ໂລກໝູ່ໄພພະຍາດຮ້າຍ ຄຸກຄາມໃກ້ມະນຸດເຮົາ ໄດ້ແລ້ວ

✻ ປຽບດັ່ງກັບໝຸ່ມນ້ອຍ ເບ້ຍອ່ອນທາງພະຫຍາ
ພາຍຸມາພານພັດ ບໍ່ໂອນແອນຄຶງຕ້ານ
ຮາກບໍ່ທັນຝັງແໜ້ນ ມີຫວັງພັງຫັກໂຄ່ນ
ຊີວິດຄຶງມອດມ້ວຍ ສູນສິ້ນແນ່ນອນ

✻ ຫາກພູມຄຸ້ມກັນເຄັ່ງເຂັ້ມ ພະຍາດບໍ່ມາພານ
ປັນຍາຍາຍສົມບູນ ອຸ່ນໃຈສະບາຍແທ້
ບໍ່ມີມານມາແຫຍ້ ສັງຂານກໍຍືນແນ່
ສາມາດສານສືບສ້າງ ຕາມທາງກ້າວພັດທະນາ ຫັ້ນນາ

✻ ຖ້າສະພາບແວດລ້ອມ ໂອບເອື້ອອາລີ
ຄົນກໍຄວນຜັດສີ ຮັກສາມັນໄວ້
ເປັນປັດໄຈໄຂແຈ້ງ ປຸງແປງໃຫ້ຖືກຊ່ອງ
ອະນິສົງຈະສົ່ງຍ້ອນ ສະໜອງໃຫ້ແຕ່ສິ່ງດີ ຊອບແລ້ວ!






# ລັດເບງກອນຕາເວັນຕົກຂອງອິນເດຍ ຜ່ານກົດໝາຍ "ປະຫານ" ຜູ້ຂົ່ມຂືນ

ລັດເບງກອນຕາເວັນຕົກ (West Bengal) ຂອງອິນເດຍ ເຊິ່ງໄດ້ຮັບຜົນກະທົບຈາກການປະທ້ວງຮຽກຮ້ອງຄວາມຍຸຕິທຳຫຼາຍອາທິດ ຫຼັງຈາກການຂົ່ມຂືນ ແລະ ຄາດຕະກຳທ່ານໝໍຍິງຄົນໜຶ່ງ ໄດ້ຜ່ານກົດໝາຍເມື່ອວັນທີ 03 ກັນຍາຜ່ານມາ, ທີ່ອາດຈະເຮັດໃຫ້ຜູ້ກະທຳຜິດຄະດີຂົ່ມຂືນຖືກຕັດສິນລົງໂທດ "ປະຫານຊີວິດ"; ການປະທ້ວງເກີດຂຶ້ນຫຼັງຈາກພົບສົບ (ເປື້ອນເລືອດ) ຂອງທ່ານໝໍຍິງ ອາຍຸ 31 ປີ ທີ່ໄດ້ເສຍຊີວິດຈາກການຖືກທຳຮ້າຍຮ່າງກາຍຢູ່ໂຮງໝໍຂອງລັດ ໃນເມືອງໂກນກາຕາ (Kolkata) ເມືອງເອກຂອງລັດເບງກອນຕາເວັນຕົກ ເມື່ອວັນທີ 09 ສິງຫາຜ່ານມາ.

ກົດໝາຍສະບັບດັ່ງກ່າວ ເຊິ່ງໄດ້ຮັບການຮັບຮອງຈາກສະພາແຫ່ງລັດ ແຕ່ຍັງບໍ່ໄດ້ຮັບການອະນຸມັດຈາກປະທານາທິບໍດີ, ໄດ້ສະແດງໃຫ້ເຫັນເຖິງຄວາມໂກດແຄ້ນຕໍ່ບັນຫາຄວາມຮຸນແຮງຕໍ່ແມ່ຍິງທີ່ຍັງເປັນບັນຫາຊໍາເຮື້ອໃນປະເທດ.

ເຖິງແມ່ນວ່າກົດໝາຍສະບັບຂ້າງເທິງມີລາຍລະອຽດທີ່ເປັນສັນຍະລັກສ່ວນຫຼາຍ, ເນື່ອງຈາກປະມວນກົດໝາຍອາຍາຂອງອິນເດຍ ມີຜົນບັງຄັບໃຊ້ແບບດຽວກັນໃນທົ່ວປະເທດຢູ່ແລ້ວ; ແນວໃດກໍຕາມ, ການອະນຸມັດຈາກປະທານາທິບໍດີ ອາດຈະເຮັດໃຫ້ເກີດມີຂໍ້ຍົກເວັ້ນແລະສົ່ງຜົນໃຫ້ກົດໝາຍໃໝ່ນີ້ສາມາດກາຍເປັນກົດໝາຍຂອງລັດໄດ້.

ກົດໝາຍດັ່ງກ່າວໄດ້ກໍານົດເພີ່ມໂທດຕໍ່ການຂົ່ມຂືນ ຈາກການຕັດສິນໂທດຈຳຄຸກຢ່າງໜ້ອຍ 10 ປີເປັນຈຳຄຸກຕະຫຼອດຊີວິດ ຫຼື ປະຫານຊີວິດ.

ເຫດການຄາດຕະກຳທ່ານໝໍຍິງຄົນໜຶ່ງໃນເດືອນຜ່ານມາ ເຮັດໃຫ້ແພດໝໍຈຳນວນຫຼາຍຢຸດງານປະທ້ວງ ແລະ ເກີດການໂຮມຊຸມນຸມທີ່ໄດ້ຮັບການສະໜັບສະໜູນຈາກປະຊາຊົນຫຼາຍພັນຄົນໃນທົ່ວປະເທດ, ເຖິງແມ່ນວ່າແພດໝໍຫຼາຍຄົນໄດ້ກັບຄືນໄປປະຕິບັດໜ້າທີ່ຕາມປົກກະຕິແລ້ວກໍຕາມ.

**ແຫຼ່ງຂ່າວ: AFP**




# ບຸນກາລີ ຈະຈັດການເລືອກຕັ້ງສະພາແຫ່ງຊາດຮອບໃໝ່ໃນເດືອນຕຸລາ



ສຳນັກຂ່າວສານຊິນຮວາລາຍງານວ່າ, ທ່ານ ຣູເມນ ຣາເດຟ (Rumen Radev) ປະທານາທິບໍດີບຸນກາລີ ໄດ້ລົງນາມໃນລັດຖະດຳລັດ ເມື່ອວັນອັງຄານທີ 27 ສິງຫາ 2024 ໃຫ້ຈັດການເລືອກຕັ້ງສະພາແຫ່ງຊາດຮອບໃໝ່ໃນວັນທີ 27 ຕຸລານີ້; ພ້ອມກັນນັ້ນ, ປະທານາທິບໍດີຍັງໄດ້ແຕ່ງຕັ້ງລັດຖະບານຮັກສາການທີ່ນຳໂດຍນາຍົກລັດຖະມົນຕີຮັກສາການຄົນປັດຈຸບັນ ທ່ານ ດິມິທາຣ໌ ກລາຟເຊຟ (Dimitar Glavchev) ໄລຍະຊົ່ວຄາວອີກຄັ້ງ.

ທ່ານ ກລາຟເຊຟ ອາຍຸ 61 ປີເປັນປະທານອົງການກວດສອບແຫ່ງລັດ ເວລາທີ່ທ່ານຖືກແຕ່ງຕັ້ງເປັນນາຍົກລັດຖະມົນຕີຮັກສາການເທື່ອທຳອິດໃນເດືອນເມສາປີນີ້, ໃນປີ 2017 ທ່ານເຄີຍດຳລົງຕຳແໜ່ງປະທານສະພາແຫ່ງຊາດ ໄລຍະ 7 ເດືອນ.

ການເລືອກຕັ້ງແລະການແຕ່ງຕັ້ງລັດຖະບານຮັກສາການໄດ້ກາຍເປັນການບັງຄັບຫຼັງຈາກສະພາແຫ່ງຊາດບໍ່ສາມາດເລືອກຕັ້ງຄະນະລັດຖະບານຊຸດປົກກະຕິໃນເດືອນມິຖຸນາຜ່ານມາ, ການເລືອກຕັ້ງຄັ້ງນີ້ ຈະເປັນຄັ້ງທີ 7 ຂອງບຸນກາລີ ໃນຮອບສາມປີເຄິ່ງ ເນື່ອງຈາກບໍ່ມີຝ່າຍການເມືອງໃດສາມາດບັນລຸໄດ້ສຽງສ່ວນຫຼາຍຢ່າງງ່າຍດາຍໃນສະພາແຫ່ງຊາດ.

# ນິກາຣາກົວຜ່ານກົດໝາຍລົງໂທດຜູ້ທີ່ທຳລາຍລະບອບການປົກຄອງຈາກຕ່າງປະເທດ



ເມື່ອວັນທີ 03 ກັນຍານີ້, ສະພາແຫ່ງຊາດແຫ່ງສາທາລະນະລັດນິກາຣາກົວຮັບຮອງເອົາກົດໝາຍທີ່ເຮັດໃຫ້ສານພາຍໃນປະເທດ ມີສິດອຳນາດຕັດສິນບຸກຄົນ ແລະ ອົງການຈັດຕັ້ງຢູ່ຕ່າງປະເທດ ທີ່ສົ່ງເສີມການຂວໍ້າບາດລັດຖະບານ.

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງມານາກົວ, ປະເທດນິກາຣາກົວ ວ່າ: ການປະຕິຮູບດ້ວຍກົດໝາຍດັ່ງກ່າວວາງໂທດຈຳຄຸກສູງສຸດ 30 ປີ ຕໍ່ຜູ້ກະທຳຜິດທີ່ຖືກສານຕັດສິນວ່າ "ທຳລາຍຄວາມໝັ້ນຄົງຂອງຊາດ" (undermining national integrity).

ກົດໝາຍສະບັບໃໝ່ນີ້ ມີຜົນບັງຄັບໃຊ້ກັບຊາວນິກາຣາກົວ ແລະ ຄົນຕ່າງປະເທດ ທີ່ລວມເຖິງບຸກຄົນ, ບໍລິສັດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ລວມທັງກຳນົດບົດບັນຍັດສຳລັບການຍຶດຊັບສິນ ເຊິ່ງເຖິງແມ່ນບໍ່ໄດ້ລະບຸຢ່າງຊັດເຈນວ່າ ການຕັດສິນໂທດຂ້າງເທິງນີ້ ຈະຖືກປະຕິບັດຢູ່ໃນດິນແດນຕ່າງປະເທດໄດ້ແນວໃດ? ແຕ່ລັດຖະບານກ່າວວ່າ ເປົ້າໝາຍແມ່ນເພື່ອສະກັດກັ້ນ "ອົງການອາຊະຍາກຳຂ້າມຊາດ"

# ສະພາຕໍ່າເມັກຊິກ ອະນຸມັດແຜນປະຕິຮູບດ້ານຕຸລາການຂອງປະທານາທິບໍດີ




ວັນພຸດທີ 04 ກັນຍາຜ່ານມາ, ສະພາຜູ້ແທນປະຊາຊົນຫຼືສະພາຕໍ່າຂອງເມັກຊິກ ໄດ້ອະນຸມັດແຜນການປະຕິຮູບດ້ານຕຸລາການທີ່ສະເໜີໂດຍປະທານາທິບໍດີ ອັນເດຣສ ມານູເອວ ໂລເປຊ ໂອບຣາດໍຣ໌ (Andrés Manuel López Obrador); ແຜນການປະຕິຮູບດັ່ງກ່າວ ໄດ້ຮັບການຮັບຮອງເອົາດ້ວຍຄະແນນ 359 ສຽງ ຈາກສະມາຊິກສະພາຈາກຂະບວນການຟື້ນຟູແຫ່ງຊາດ ພັກລັດຖະບານປັດຈຸບັນພ້ອມດ້ວຍພັນທະມິດຄືພັກແຮງງານ ແລະ ພັກຂຽວ, ແລະ ມີ 135 ສຽງຄັດຄ້ານ (ສະພາຕໍ່າເມັກຊິກ ມີ 500 ທີ່ນັ່ງ).

ການປະຕິຮູບດັ່ງກ່າວຮຽກຮ້ອງໃຫ້ມີການເລືອກຕັ້ງຜູ້ພິພາກສາດ້ວຍຄະແນນສຽງຂອງປະຊາຊົນ ແທນການແຕ່ງຕັ້ງທາງການເມືອງ ແລະ ຫຼຸດຈຳນວນຜູ້ພິພາກສາໃນສານຍຸຕິທຳສູງສຸດແຫ່ງຊາດ ຈາກ 11 ເຫຼືອ 9 ຄົນພ້ອມທັງຫຼຸດອາຍຸການດຳລົງຕຳແໜ່ງຂອງຜູ້ພິພາກສາ ຈາກ 15 ເຫຼືອ 12 ປີ; ນອກຈາກນີ້, ຍັງຮຽກຮ້ອງໃຫ້ຍົກເລີກເງິນບຳນານຕະຫຼອດຊີວິດທີ່ຜູ້ພິພາກສາສານສູງສຸດໃນປັດຈຸບັນ ແລະ ອະນາຄົດ ຈະໄດ້ຮັບ.

ບັນດາສະມາຊິກສະພາຕ້ອງອະພິປາຍກ່ຽວກັບແຜນການປະຕິຮູບຢູ່ສະຖານທີ່ອື່ນແທນສຳນັກງານໃຫຍ່ຂອງອົງການນິຕິບັນຍັດ, ເນື່ອງຈາກພະນັກງານຕຸລາການໄດ້ອອກມາປະທ້ວງ ແລະ ປິດປະຕູທາງເຂົ້າອາຄານໃນຕອນເຊົ້າວັນອັງຄານທີ 03 ກັນຍາ ເພື່ອພະຍາຍາມຢຸດການລົງຄະແນນສຽງບໍ່ໃຫ້ດຳເນີນຕໍ່ໄປ; ສະມາຊິກສະພາໄດ້ຈັດກອງປະຊຸມຢູ່ສະໜາມກິລາ Magdalena Mixhuca Sports City ແທນ.

**ແຫຼ່ງຂ່າວ: ຊິນຮວາ**

ເຝົ້າເວົ້າ ໄດ້ຍິນ ດຣາມ

# ດຶງດູດນັກທ່ອງທ່ຽວ ດ້ວຍນະໂຍບາຍດຶງ ແລະ ມາດຕະຖານຄວາມປອດໄພ

❖ ວິເສດ ສະແຫວງສຶກສາ

ພົບກັນວັນນີ້ ມີສອງເລື່ອງມາເວົ້າໃຫ້ຟັງ ໂດຍເລີ່ມຈາກຂ່າວການປັບປ່ຽນລະບຽບການ ໃນສະຖານທີ່ທ່ອງທ່ຽວຍອດນິຍົມຂອງກຳປູເຈຍ ແລະ ເລື່ອງບັນດາຕົວເມືອງໃຫຍ່ໃນໂລກ ທີ່ໄດ້ມາດຕະຖານຄວາມປອດໄພ ທີ່ສຸດສຳລັບນັກທ່ອງທ່ຽວ. ທີ່**ກຳປູເຈຍ** ມີຂ່າວອອກມາ ໃນຕົ້ນເດືອນສິງຫາປີນີ້ວ່າທາງການກຳປູເຈຍ ໂດຍສະເພາະແມ່ນອົງການທ່ອງທ່ຽວ "ອັບສະຣາ" ໄດ້ເປີດເຜີຍລະບຽບການໃໝ່ ທີ່ອະນຸຍາດໃຫ້ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຖ່າຍຮູບຢູ່ເຂດອຸທິຍານບູຮານຄະດີ ອັງກໍວັດ ໂດຍເອົາໃຫ້ເຫັນພາບໂຕຜາສາດອັງກໍວັດເປັນສາກຫຼັງ. ນີ້ຖືວ່າເປັນຂ່າວດີສຳລັບບັນດາຕາກ້ອງ ແລະ ເຫຼົ່ານັກທ່ອງທ່ຽວທີ່ຕ້ອງການພາບທີ່ລະນຶກກັບຜາສາດອັງກໍວັດ ເຊິ່ງເປັນ 1 ໃນ 12 ສະຖານທີ່ທ່ອງທ່ຽວຍອດນິຍົມຂອງໂລກ, ເປັນ 1 ໃນ 7 ສິ່ງມະຫັດສະຈັນຂອງໂລກ ແລະ ທັງເປັນມໍລະດົກໂລກຂອງອົງການອຸຍເນດສະໂກອີກດ້ວຍ. ລາຍລະອຽດຂອງຂ່າວບອກວ່າ ບັນດາຄູ່ຮັກທັງຫຼາຍສາມາດຖ່າຍພາບ "ກ່ອນວັນແຕ່ງ" ໃນຊຸດປະຈຳຊາດຂອງຕົນເອງໄດ້ ຢູ່ດ້ານໜ້າຂອງອັງກໍວັດໂດຍບໍ່ເສຍຄ່າ (ໃນເມື່ອກ່ອນນັ້ນແມ່ນຕ້ອງໄດ້ເສຍຄ່າ) ສ່ວນນັກທ່ອງທ່ຽວທົ່ວໄປ ກໍສາມາດຖ່າຍພາບທີ່ລະນຶກໄດ້ໂດຍບໍ່ເສຍຄ່າເຊັ່ນກັນ. ໃນເມື່ອກ່ອນ ການຖ່າຍພາບທີ່ລະນຶກກ່ອນວັນແຕ່ງ (Pre-wedding) ທີ່ມີພາບຜາສາດອັງກໍວັດຢູ່ສາກຫຼັງນັ້ນ ນອກຈາກຕ້ອງໄດ້ເສຍຄ່າແລ້ວ ຍັງຕ້ອງໄດ້ຮັບອະນຸຍາດຈາກອົງການທ່ອງທ່ຽວອັບສະຣາກ່ອນ. ທ່ານ ຮຸນມາເນັດ ນາຍົກລັດຖະມົນຕີກຳປູເຈຍ ກ່າວກ່ຽວກັບນະໂຍບາຍຜ່ອນຜັນນີ້ວ່າ "ເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ມາທ່ຽວຊົມຜາສາດອັງກໍວັດ". ແນວໃດກໍດີ, ການຖ່າຍພາບທີ່ລະນຶກຕາມຈຸດຕ່າງໆຂອງອັງກໍວັດນັ້ນຕ້ອງປະຕິບັດຕາມລະບຽບພາຍໃນຂອງນະຄອນວັດຢ່າງເຄັ່ງຄັດຄື ຫ້າມນຸ່ງເຄື່ອງທີ່ເປີດເຜີຍບັນດາຈຸດສະຫງວນຂອງຮ່າງກາຍ, ຫ້າມຖ່າຍພາບລາມົກອານາຈານ, ຫ້າມລະເມີດຄ່ານິຍົມທາງວັດທະນະທຳ ແລະ ຫ້າມຖ່າຍພາບທີ່ບໍ່ເໝາະສົມ. ການຖ່າຍພາບເພື່ອຈຸດປະສົງໃນຮູບແບບການຄ້າ, ການຖ່າຍຮູບເງົາ ແລະ ການຖ່າຍພາບດ້ວຍໂດຣນນັ້ນຕ້ອງໄດ້ຂໍອະນຸຍາດຈາກອົງການທ່ອງທ່ຽວອັບສະຣາ ແລະ ຈ່າຍຄ່າທຳນຽມບາງສ່ວນ.

ຜາສາດອັງກໍວັດ ໄດ້ຮັບການກໍ່ສ້າງຂຶ້ນ ໃນລະຫວ່າງສະຕະວັດທີ 9-13 ລາຍໄດ້ຈາກການຂາຍບັດເຂົ້າຊົມສະຖານທີ່ແຫ່ງນີ້ແຕ່ເດືອນມັງກອນ ຫາເດືອນກໍລະກົດປີນີ້ ບັນລຸເກືອບ 27,2 ລ້ານໂດລາສະຫະລັດ.

ເລື່ອງທີ່ສອງເພື່ອປິດທ້າຍບົດນີ້ ນັ້ນພົວພັນກັບບັນຫາການທ່ອງທ່ຽວເຊັ່ນກັນ ແຕ່ເນັ້ນມາດຕະຖານຄວາມປອດໄພສຳລັບນັກທ່ອງທ່ຽວ. ຄວາມປອດໄພແມ່ນຫົວໃຈສຳຄັນຂອງການທ່ອງທ່ຽວ. ສະຖານທີ່ທ່ອງທ່ຽວເຖິງຈະງົດງາມມີສະເໜ່ ມີປະຫວັດຄວາມເປັນມາທີ່ພິລຶກກຶກກືປານໃດກໍຕາມ ແຕ່ຖ້າຂາດຄວາມປອດໄພແລ້ວ ຄົງບໍ່ມີນັກທ່ອງທ່ຽວໜ້າໃດຕ້ອງການເຂົ້າໄປຢ້ຽມຢາມ. ຄວາມປອດໄພທີ່ຈຳເປັນສຳລັບນັກທ່ອງທ່ຽວນັ້ນ ກໍຄືຄວາມປອດໄພຈາກໄພພິບັດທາງທຳມະຊາດ, ຈາກອາຊະຍາກຳປຸ້ນຈີ້ດຶງກະເປົາ, ສໍ້ໂກງຕົ້ມຕຸ໋ນ, ປອດໄພຈາກການລະບາດຂອງພະຍາດແລະຄວາມສ່ຽງອື່ນໆ ຕໍ່ສຸຂະພາບ ແລະ ຊີວິດ. ແລ້ວກໍມີຂ່າວກ່ຽວກັບຜົນຂອງການສຳຫຼວດ 60 ຕົວເມືອງໃຫຍ່ໃນທົ່ວໂລກ ດ້ານມາດຕະຖານຄວາມປອດໄພ ໂດຍເວັບໄຊ Forbes Advisor ໃນທ້າຍເດືອນກໍລະກົດປີນີ້ ທີ່ຊີ້ບອກວ່າ **ສິງກະໂປ** ເປັນສະຖານທີ່ທ່ອງທ່ຽວທີ່ມີຄວາມປອດໄພເປັນອັນດັບທີ 1 ສຳລັບນັກທ່ອງທ່ຽວ. ສ່ວນອີກ 9 ຕົວເມືອງໃຫຍ່ທີ່ໄດ້ອັນດັບທີ 2 ຫາທີ 9 ນັ້ນໄດ້ແກ່ໂຕກຽວ-ຍີ່ປຸ່ນ, ໂຕຣອນໂຕ-ການາດາ, ຊິດນີ-ອົດສະຕຣາລີ, ຊູຣິກ-ສະວິດ, ໂກເປັນຮາເກັນ-ດານມາກ, ເຊອູນ-ສ.ເກົາຫຼີ, ໂອຊາກາ-ຍີ່ປຸ່ນ, ເມວເບີນ-ອົດສະຕຣາລີ ແລະ ອາມສະເຕີດາມ-ໂຮນລັງ.

ສະຫຼຸບຈາກ 2 ເລື່ອງທີ່ເລົ່າມານັ້ນ ກໍຄືຕ້ອງມີການຜ່ອນຜັນບາງລະບຽບການທີ່ບໍ່ຈຳເປັນ ເພື່ອດຶງດູດນັກທ່ອງທ່ຽວໃຫ້ໄດ້ຫຼາຍ ແລະພິເສດສຸດໆກໍແມ່ນເລື່ອງຄວາມປອດໄພ.




## ບໍ່ສົນ

*#ບ່າວກະບື*

ບົບຖະໜົນຢູ່ເຂດຊົນນະບົດ, ໂຊເຟີລົດ ຫຼຽວເບິ່ງແວ່ນສະທ້ອນຫຼັງ ເພື່ອສັງເກດຄົນຂີ່ລົດຈັກແຊງຂຶ້ນມາຢ່າງວ່ອງໄວ. ຜູ້ຂີ່ລົດຈັກເທົ້າງຫຼັງໃສ່ອານບັ່ງ, ຍົກຂາກ່າຍເຂົາລົດ, ມືທັງສອງເບື້ອງຄົ້ນຖົງ.

ພໍເຂົາຂັບມາໄດ້ລະດັບຄຽງກັບລົດໃຫຍ່, ເຈົ້າຂອງລົດຈັກກໍດຶງເອົາຊອງຢາສູບອອກມາ, ປ່ອນຢາກອກໜຶ່ງເຂົ້າປາກ ແລ້ວເອົາມືຕົບແວ່ນປ່ອງຢ້ຽມປະຕູລົດໃຫຍ່. ເຂົາຖາມໂຊເຟີລົດວ່າມີກັບໄຟຕິດໂຕມາບໍ່. ໂຊເຟີລົດຖາມຄືນວ່າ: "ເຈົ້າບໍ່ຮູ້ບໍ່ວ່າ ເຮັດແນວນັ້ນທັ້ນເຈົ້າຊິຂ້າໂຕເອງຕາຍແລ້ວ?"

"ບໍ່ສົນ" ຄົນຂັບລົດຈັກເວົ້າອອກມາ "ກອກນີ້ຫາກໍ່ເປັນກອກທີສອງເທົ່ານັ້ນສຳລັບມື້ນີ້"

## No Worries

*#BAOKBU*

A driver on a country road was looking in his rear-view mirror to see a motorcyclist over taking him rapidly. The motocyclist was leaning back in the seat with one leg hooked over the handlebars as his hands fished around in his pockets.

As he drew level to the car, the motorcyclist pulled out a packet of cigarettes, put one in his mouth, and tapped on the driver's window. He then asked the driver if he had a match.

"Don't you realise you could kill yourself doing that?" the driver asked.

"No worries," said the motorcyclist.

"This is only my second cigarette today."

ຕາມພາສາ ກາຕູນ




● ໂດຍ : ພູຜາ

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ

ລັດຖະທຳມະນູນ

ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ: laocon@nalao.la

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ